ບົດເລື່ອງກ່ຽວກັບ ຜູ້ນຳທາງ: ເປັນແນວທາງແບບໃໝ່ໃນການຕໍ່ສູ້ກັບການຄ້າມະນຸດ ແລະ ການເຄື່ອນຍ້ານແຮງງານທີ່ບໍ່ປອດໄພ

ເຄື່ອງມືທີ່ໃຊ້ເຂົ້າໃນການເຄື່ອນຍ້າຍແຮງງານທີ່ປອດໄພ

© ສະຫງວນລິຂະສິດໂດຍ ອົງການສຸພະນິມິດສາກົນ, 2014

ລະຫັດຂອງປຶ້ມຫົວນີ້: 978-0-918261-43-4

ຂຽນ ແລະຮຽບຮຽງໂດຍ: ທ່ານ ນາງ ແຄມມິນລາ ຈຳແດນວູດ, ທ່ານ ຈອນ ວັນຢູນ, ທ່ານ ນາງ ແອັມມີ້ ໂຄລິນ, ທ່ານ ນາງ ທິບພັນນີ້ ເຕົາ ຈອຍເນີ້, ທ່ານ ນາງ ແອັມມີ້ບລິນ ກາບເຣວ, ແລະ ທ່ານ ແມນດີ້ ຢາມານິດສ.

ສະຫງວນສິດທຸກຢ່າງ, ຫ້າມນຳເອົາສ່ວນໃດໜຶ່ງອອກພິມ ຫຼື ສ້າງຄືນໃໝ່ໃນຮູບແບບໃດໜຶ່ງ, ຍົກເວັ້ນຖ້ອຍຄຳຫຍໍ້ໃນການທວນຄືນ ໂດຍປັດສະຈາກການອະນຸຍາດຂອງຜູ້ພິມຈຳໜ່າຍ.

ພິມໂດຍ: ໂຄງການຕ້ານການຄ້າມະນຸດ ໃນນາມອົງການ ສຸພະນິມິດສາກົນ.

ອົງການສຸພະນິມິດແມ່ນອົງການ ຄຣິດຕຽນ ເພື່ອມະນຸດສະທຳ, ອຸທິດວຽກງານເພື່ອເດັກນ້ອຍ, ຄອບຄົວພວກເຂົາ ແລະ ຊຸມຊົນ ເພື່ອຕໍ່ສູ້ກັບຄວາມທຸກຍາກ ແລະ ຄວາມບໍ່ຍຸຕິທຳ.

ດ້ວຍແຮງບັນດານໃຈໂດຍ: ຄວາມເປັນຄຣິດຕຽນ, ອົງການສຸພະນິມິດໄດ້ອຸທິດວຽກງານເພື່ອຜູ້ດ້ອຍໂອກາດທີ່ສຸດໃນໂລກ. ອົງການສຸພະນິມິດ ເຮັດວຽກເພື່ອໝົດທຸກຄົນ ໂດຍບໍ່ໄດ້ຄຳນຶງເຖິງສາສະໜາ, ຊົນເຜົ່າ, ເພດ-ໄວ.

ຖ້າຕ້ອງການຂໍ້ມູນເພີ່ມກ່ຽວກັບການພິມຈຳໜ່າຍ ຫຼື ການພິມຂອງອົງການສຸພະນິມິດສາກົນ ຫຼື ເພື່ອຕ້ອງການສຳເນົາເພີ່ມຈົ່ງເຂົ້າເບິ່ງຕາມທີ່ຢູ່ນີ້: wvi_publishing@wvi.org.

ອົງການສຸພະນິມິດສາກົນ ມີຄວາມຍິນດີທີ່ທ່ານທາການຳໃຊ້ປຶ້ມສະບັບນີ້ເຂົ້າໃນການຝຶກອົບຮົມ, ການວິໃຈ, ການອອກແບບແຜນງານ, ການຈັດຕັ້ງປະຕິບັດ ຫຼື ການປະເມີນ.

ບໍລິຫານງານໂດຍ: ໃນນາມໂຄງການຕ້ານການຄ້າມະນຸດໂດຍ ທ່ານ ນາງ ແອັມມີ້ ໂຄລິນ. ບັນນາທິການອາວຸໂສ: ຣິດເຕີ້ ອີລີອ໊ອດ. ບໍລິຫານການຜະລິດໂດຍ: ແຄັດຕີ້ ກໂລແມນ ໄຟ. ກອດສຳເນົາໂດຍ: ໂຈນ ລາເຟຣມ. ຮັບປະກັນການອ່ານໂດຍ: ອູດີ້ ດ໊ອດ. ອອກແບບໜ້າປົກ ແລະພາຍໃນໂດຍ: ບໍລິສັດ ອິນນິດ ຄອມມຸຍນິເຄເຊິນ. ປະກອບພາບໂດຍ: ຣິດຊີ້ ແມນຢັນ, ຈອນເຄວິນ ໂຄ ແລະ ບເລັບ ຄາລອດສ ດາໂປ້

ອອກແບບ ແລະ ພິມໂດຍບໍລິສັດ ອິນນິດ ຄອມມຸຍນິເຄເຊິນ-www.iniscommunication.com

World Vision

# ປຶ້ມຄູ່ມື ນຳໃຊ້ເຂົ້າໃນການ

# ເຄື່ອນຍ້າຍແຮງງານທີ່ປອດໄພ



ເລື່ອງຂອງການເດີນທາງ



# ສະແດງຄວາມຮູ້ບຸນຄຸນ

ໃນເບື້ອງຕົ້ນຜູ້ຂຽນໄດ້ຂຽນເຄື່ອງມືທີ່ໃຊ້ໃນການເດີນທີ່ປອດໄພ,ທ່ານ ນ. ແຄມມີລາ ຈຳເດັນວູດ ໄດ້ສະແດງຄວາມປະທັບໃຈໃນການອຸທິດຄຳໝັ້ນສັນຍາເພື່ອພັດທະນາ ແລະ ສ້າງເຄື່ອງມືທັກສະຊີວິດເພື່ອນຳໄປສິດສອນໃຫ້ກັບບັນດາເດັກນ້ອຍ, ໃຫ້ຮູ້ເຖິງກ່ຽວກັບການເຂົ້າເມືອງທີ່ປອດໄພ ແລະ ກໍ່ໃຫ້ຮູ້ເຖິງກ່ຽວກັບຄວາມສ່ຽງຕ່າງໆຈາກການຄ້າມະນຸດ.

ເຄື່ອງມືສະບັບນີ້ໄດ້ມີການທວນຄືນ ແລະ ດັດແກ້ໂດຍທ່ານ ຈອນວັນຢູນ ຫົວໜ້າແຜນງານປະຈຳພາກພື້ນທ່ານ ນ. ແອມມີ້ ຄໍລິນ ຫົວໜ້າໜ່ວຍງານປ້ອງກັນປະຈຳພາກພື້ນ, ທ່ານ ນ. ທິບພານີ້ເຕົາ ຈອຍເນີ້, ວິຊາການຜູ້ຊ່ຽວຊານດ້ານສິດທິເດັກນ້ອຍ ແລະ ການຢູ່ດີຂອງເດັກ ແລະ ທ່ານ ນ. ໄອມີລີນ ກາແບວ ວິຊາການໂຄງການສຳລັບປົກປ້ອງສິດທິເດັກນ້ອຍ ແລະ ທ່ານ. ນ ແມນດີ້ ຢາມາເນັດ ຜູ້ຮັບຜິດຊອບວຽກງານປົກປ້ອງເດັກ ແລະ ສູນກາງຮຽນຮູ້ຂອງເດັກ.

ຂອບໃຈພິເສດມາຍັງພະນັກງານໂຄງການສະກັດກັ້ນການຄ້າມະນຸດ ທີ່ມີສ່ວນຮ່ວມໃນການປັບປຸງຄູ່ມືສະບັບນີ້, ໃນນັ້ນລວມມີ ທ່ານ. ນ ກິມເຈຍ ພິກ ແລະ ທ່ານ. ໂສປໍ ເຊຍ ທີ່ຢູ່ໂຄງການສະກັດກັ້ນການຄ້າມະນຸດກຳປູເຈຍ, ທ່ານ. ນ ເພີຍຫວັງ ໂຄງການສະກັດກັ້ນການຄ້າມະນຸດປະເທດຈີນ, ທ່ານ. ສຸທະສາບຸດສະດີ ແລະ ທ່ານ. ພຸດທະລັກ ພົນຊາວນາ ໂຄງການສະກັດກັ້ນການຄ້າມະນຸດປະເທດລາວ, ທ່ານ. ນ ບານອັ່ງ ແລະ ທ່ານ. ຄິນເມວຖັນ ໂຄງການສະກັດກັ້ນການຄ້າມະນຸດປະເທດພະມ້າ, ທ່ານ. ຊາຍໄທຮັກສາຊາດ ແລະ ທ່ານ. ນ ພອນພິມົນ ຈັນກະຈ່າງ ໂຄງການສະກັດກັ້ນການຄ້າມະນຸດ ປະເທດໄທ ແລະ ທ່ານ. ນ ລີຖິທັນ ຮັ່ງ ແລະ ທ່ານ. ນ ວູຖິດູ ໂຄງການສະກັດກັ້ນການຄ້າມະນຸດປະເທດຫວຽດນາມ.

ຂອບໃຈຢ່າງລົ້ນເຫຼືອມາຍັງພະນັກງານໂຄງການສະກັດກັ້ນການຄ້າມະນຸດຂອງອົງການສຸພະນິມິດໝົດທຸກຄົນທີ່ໄດ້ກໍ່ໃຫ້ເກີດສ້າງຫຼັກສູດນີ້ຂຶ້ນມາ.

ຂອບໃຈຢ່າງລົ້ນເຫຼືອມາຍັງຜູ້ຊ່ຽວຊານທຸກທ່ານ, ນັກຄົ້ນຄ້ວາໝົດທຸກຄົນ,ຜູ້ທີ່ເປັນກະບອກສຽງໃນການສຶກສາຄົ້ນຄ້ວາ, ສ້າງເອກະສານໃນການຮຽນຮູ້ການເຄື່ອນຍ້າຍແຮງງານທີ່ບໍ່ປອດໄພ ແລະ ການຄ້າມະນຸດໃນບັນດາປະເທດລຸ່ມແມ່ນ້ຳຂອງ, ຂອບໃຈຢ່າງລົ້ນເຫຼືອມາຍັງຜູ້ທີ່ເຮັດວຽກຢ່າງຈິງຈັງໃນການຊ່ວຍເຫຼືອ ແລະ ເຕືອນສະຕິຂອງພວກເຮົາໃຫ້ເຂົ້າໃຈຕໍ່ຄວາມວຸ້ນວາຍໃນການປົກປ້ອງສິດທິເດັກ ແລະ ການປົກປ້ອງພວກເຂົາ.



# ບົດນຳ



ການຄ້າມະນຸດແມ່ນອາດສະຍາກຳທີ່ຮ້າຍແຮງທີ່ກະທົບຕໍ່ຜູ້ຊາຍ, ຜູ້ຍິງ ແລະ ເດັກນ້ອຍໃນທົ່ວໂລກ. ມັນກ່ຽວພັນກັບການເອົາຄົນ ຫຼື ຮັກສາຄົນໃຫ້ຢູ່ໃນສະຖານນະການຖືກກົດຂີ່ຂູດຮີດ,ຕາມປົກກະຕິແລ້ວແມ່ນເພື່ອຫວັງຜົນກຳໄລ.ການຂູດຮີດສາມາດກ່ຽວພັນກັບສະຖານນະການຕ່າງໆລວມມີ : ການບັງຄັບ ຫຼື ການເຮັດວຽກເພື່ອໃຊ້ໜີ້, ການໃຊ້ແຮງງານເດັກ, ການຂູດຮີດທາງເພດ, ການເຮັດວຽກຮັບໃຊ້ຢູ່ໃນບ້ານ ຫຼື ການບັງຄັບໃຫ້ຂໍທານ.

ປະເທດລຸ່ມແມ່ນ້ຳຂອງກໍ່ມີ 6 ປະເທດທີ່ເຊື່ອມຕໍ່ໂດຍແມ່ນ້ຳຂອງ: ປະເທດກຳປູເຈຍ, ປະເທດລາວ, ປະເທດມະມ້າ, ປະເທດໄທ ແລະ ຫວຽດນາມ. ທີ່ມີໂອກາດພຽງເລັກນ້ອຍໃນການເຂົ້າເມືອງທີ່ປອດໄພ ແລະຖືກກົດໝາຍໃນບັນດາລຸ່ມແມ່ນນ້ຳຂອງ, ການເຄື່ອນຍ້າຍແຮງງານທີ່ບໍ່ເປັນປົກກະຕິກໍ່ຍັງມີການປະຕິບັດຢ່າງແຜ່ຫຼາຍ, ກໍ່ໃຫ້ເກີດມີການນອງເລືອດຈາກການຄ້າມະນຸດ ແລະການຂູດຮີດແຮງງານເຄື່ອນຍ້າຍ.ໃນຄະນະທີ່ການຄ້າມະນຸດກໍ່ເປັນເລື່ອງທີ່ຫຍຸ້ງຍາກ ເນື່ອງຈາກວ່າເປັນສິ່ງທີ່ຜິດກົດໝາຍ ແລະ ຍາກທີ່ຈະຄົ້ນຫາຜູ້ກະທຳຄວາມຜິດ, ມີຫຼັກຖານຈຳນວນຫຼວງຫຼາຍທີ່ສະແດງເຖິງຮູບແບບຕ່າງໆຂອງການຄ້າມະນຸດໃນປະເທດລຸ່ມແມ່ນນ້ຳຂອງ.

ບັນດາລັດຖະບານຂອງປະເທດລຸ່ມແມ່ນ້ຳຂອງອົງການສະຫະປະຊາຊາດ ແລະ ມີຫຼາຍອົງການທີ່ບໍ່ຂຶ້ນກັບລັດຖະບານ ເຊິ່ງລວມມີອົງການສຸພະນິມິດທີ່ກຳລັງເຮັດວຽກຢ່າງໜັກໜ່ວງໃນການຕໍ່ສູ້ກັບການຄ້າມະນຸດ. ໂຄງການສະກັດກັ້ນການຄ້າມະນຸດຂອງອົງການສູພະນິມິດ ເປັນໂຄງການໜຶ່ງທີ່ສະກັດກັ້ນການຄ້າມະນຸດໃນຂົງເຂດເຊິ່ງໄດ້ປະຕິບັດພາລະກິດດັ່ງກາວນີ້ມາຕັ້ງແຕ່ເດືອນ ຕຸລາ ປີ 2011 ແລະ ຈະຍາວໄປເຖິງເດືອນກັນຍາ ປີ 2016. ມີການເຮັດວຽກຮ່ວມກັນ 6 ປະເທດຂອງບັນດາປະເທດລຸ່ມແມ່ນ້ຳຂອງ,ໂຄງການຢຸດຕິການຄ້າມະນຸດເປັນໂຄງການທີ່ໃຫຍ່ ແລະ ປະກອບດ້ວຍ 3 ໂຄງການຍ່ອຍ; ປ້ອງກັນ , ປົກປ້ອງ ແລະ ນະໂຍບາຍ.

ເພາະວ່າອົງການສຸພະນິມິດພິຈາລະນາເຖິງເດັກນ້ອຍ ແລະ ໄວໜຸ່ມເປັນໜ່ວຍງານທີ່ສຳຄັນຂອງການປ່ຽນແປງ, ຍົກສູງສິດເດັກນ້ອຍ ແລະ ໄວໜຸ່ມໃຫ້ມີການກ່ຽວຂ້ອງໂດຍກົງກັບການປະຕິບັດງານເພື່ອຕໍ່ສູ້ກັບການຄ້າມະນຸດ.ໂຄງການຢຸດຕິການຄ້າມະນຸດໄດ້ມີການລົງທຶນ ແລະ ເຮັດໃຫ້ເດັກນ້ອຍມາຮ່ວມໃນກິດຈະກຳໃນໜ່ວຍງານໜຶ່ງຂອງໂຄງການປ້ອງກັນກໍ່ຄືການພັດທະນາສະໂມສອນເດັກ. ເພື່ອໃຫ້ພວກເຂົາດຳເນີນກິດຈະກຳເປັນປົກກະຕິ.ການຮຽນຮູ້ ແລະ ທັກສະຕ່າງໆໃນການປົກປ້ອງຕົວຂອງພວກເຂົາຈາກການຄ້າມະນຸດ ແລະ ພ້ອມດຽວກັນນັ້ນພວກເຂົາຍັງໄດ້ກະຈາຍຄວາມຮູ້ໄປຍັງເພື່ອນໆຂອງພວກເຂົາ. ເຄື່ອງມືສະບັບນີ້ແມ່ນໄດ້ຖືກອອກແບບໃຫ້ເດັກນ້ອຍຜູ້ທີ່ດ້ອຍໂອກາດທີ່ສຸດໄດ້ມີການພັດທະນາທັກສະຊີວິດ, ລວມມີແນວຄິດທີ່ສ້າງສັນ, ການຕັດສິນໃຈ, ການສື່ສານທີ່ດີ ແລະ ການເຈຍລະຈາ,ການບໍລິຫານຕົນເອງ ແລະການວາງແຜນເປົ້າໝາຍຂອງຊີວິດ. ທັກສະຊີວິດດັ່ງກ່າວນີ້ຈະຊ່ວຍໃຫ້ເດັກນ້ອຍມີຄວາມຕື່ນຕົວ ແລະຫລີກລ້ຽງກັບຄວາມອັນຕະລາຍທີ່ຈະເກີດຂຶ້ນຄື: ຄວາມສ່ຽງຕ່າງໆທີ່ພວກເຂົາຈະປະເຊີນເຊັ່ນວ່າ: ຜູ້ຄ້າມະນຸດຕ່າງໆມາໃຊ້ເລ່ກົນເພື່ອຫລອກຫລວງພວກເຂົາ.

ພວກເຮົາເຊື່ອວ່າເຄື່ອງມືສະບັບນີ້ມີອຳນາດພໍທີ່ຈະລໍ່ຫຼອມຊີວິດຂອງເດັກນ້ອຍ, ດັ່ງນັ້ນພວກເຂົາສາມາດປົກປ້ອງຕົວພວກເຂົາເອງ ແລະ ຊຸມຊົນຂອງພວກເຂົາຈາກການຄ້າມະນຸດ. ສະໂມສອນເດັກໄດ້ຖືກອອກແບບມາເພື່ອດຳເນີນຄວາມຮູ້ໃນການປ້ອງກັນໃຫ້ບັນດາເດັກນ້ອຍເພື່ອໃຫ້ພວກເຂົາໄດ້ຮຽນຮູ້ຫຼາຍໆລຸ້ນ ແລະນີ້ກໍ່ແມ່ນເປັນບາດກ້າວອັນທຳອິດ.

ທ່ານ ນ.ແອັງເຈສະຕິ່ງ
ຫົວໜ້າພາກພື້ນຂອງອາຊີຕາເວັນອອກ.



# ສາລະບານ


**ການແນະນຳ.....1**

**ພາກ ກ: ການສ້າງຕັ້ງສະໂມສອນເດັກ.....2**

ໃບຍິນຍອມ: ສຳລັບຜູ້ປົກຄອງເດັກ.....4

ແບບຟອມປະເມີນຄູຝຶກ.....5

ກິດຈະກຳການສ້າງທີມງານ.....9

ກິດຈະກຳອົບອຸ່ນຮ່າງການ1: ລຽນແຖວຕາມ.....9

ກິດຈະກຳອົບອຸ່ນຮ່າງການ2:ເກມໝາກບານ.....10

ກິດຈະກຳອົບອຸ່ນຮ່າງການ3: ບາງສິ່ງທີ່ເຈົ້າບໍ່ຮູ້:.....11

ກິດຈະກຳອົບອຸ່ນຮ່າງການ4:ເກມທົບທວນຄວາມຈຳ...12

ກິດຈະກຳອົບອຸ່ນຮ່າງການ5:ເກມປິດສະໜາ.....13

ກິດຈະກຳອົບອຸ່ນຮ່າງການ6:ເກມຜ້າແພ.....17

ບົດທີ1:ການແນະນຳສະໂມສອນ.....18

ບົດທີ2: ຄິດກ່ຽວກັບຊີວິດຂອງເຮົາ.....25

**ພາກ ຂ: ຂໍ້ມູນກ່ຽວກັບການຄ້າມະນຸດ ແລະ ການເຄື່ອນຍ້າຍແຮງງານ.....32**

**ບົດທີ 3:** ການຄ້າມະນຸດແມ່ນຫຍັງ?

ການເຄື່ອນຍ້າຍແຮງງານແມ່ນຫຍັງ?.....30

**ບົດທີ 4:** ການຄ້າມະນຸດສາມາດເກີດໄດ້ທຸກບ່ອນ.....38

**ບົດທີ 5:** ການຈຳແນກພາໃຫ້ຜູ້ຍິງ ແລະ ເດັກຍິງຕົກຢູ່ໃນຄວາມສ່ຽງຂອງການຄ້າມະນຸດ.....54

**ບົດທີ 6:** ຜົນຮ້າຍຂອງຢາເສບຕິດ.....59

**ບົດທີ 7:** ການຄ້າເດັກ ແລະການຂູດຮີດແຮງງານເດັກ..70

**ບົດທີ 8:** ການຄ້າມະນຸດເພື່ອຂູດຮີດທາງເພດ.....80

**ບົດທີ 9:** ຢ່າຫຼົງເຊື່ອເລ່ກົນຜູ້ຄ້າມະນຸດ.....87

**ບົດທີ 10:** ສົນທິສັນຍາວ່າດ້ວຍສິດທິເດັກ.....99

**ບົດທີ 11:** ກົດໝາຍຕ້ານການຄ້າມະນຸດ.....104

**ບົດທີ 12:** ການເຄື່ອນຍ້າຍແຮງງານທີ່ປອດໄພ.....114

**ພາກ ຄ: ທັກສະຊີວິດ ສາມາດໃຫ້ຄົນເອົາຕົວລອດໄດ້.....118**

**ບົດທີ 13:** ທັກສະໃນການສື່ສານ.....120

**ບົດທີ 14:** ທັກສະໃນການຟັງ.....127

**ບົດທີ 15:** ອາລົມ ແລະຄວາມຄິດ.....135

**ບົດທີ 16:** ການບໍລິຫານອາລົມ.....142

**ບົດທີ 17:** ຜູ້ຄ້າມະນຸດ ຫຼື ບໍ່ແມ່ນ.....148

**ບົດທີ 18:** ຄວາມປອດໄພໃນການນຳໃຊ້ອິນເຕີເນັດ...156

**ພາກ ງ: ການວາງແຜນການເຄື່ອນຍ້າຍແຮງງານທີ່ປອດໄພ.....164**

**ບົດທີ 19:** ທັກສະໃນການຕັດສິນໃຈ.....166

**ບົດທີ 20:** ການຮຽນຮູ້ເພີ່ມຕື່ມ.....175

**ບົດທີ 21:** ການຕັ້ງຄຳຖາມ.....180

**ບົດທີ 22:** ລາຍການເຄື່ອນຍ້າຍແຮງງານທີ່ປອດໄພ...182

**ບົດທີ 23:** ການຮັກສາຄວາມປອດໄພໃນການເດີນທາງ..187

**ບົດທີ 24:** ເມື່ອໄປເຖິງປາຍທາງ.....195

**ບົດທີ 25:** ເຈົ້າຈະເຮັດແນວໃດໃນເມື່ອເຈົ້າຖືກຄ້າມະນຸດ...206

**ບົດທີ 26:** ທົບທວນການເຄື່ອນຍ້າຍແຮງງານທີ່ປອດໄພ..214

**ພາກ ຈ: ການລົງມືປະຕິບັດ.....218**

**ບົດທີ 27:** ການແບ່ງປັນຄວາມຮູ້.....220

**ບົດທີ 28:** ແຜນກິດຈະກຳຊຸມຊົນ 1:.....231

**ບົດທີ 29:** ແຜນກິດຈະກຳຊຸມຊົນ 2.....236

**ບົດທີ 30:** ແຜນກິດຈະກຳຊຸມຊົນ 3.....242

**ບົດທີ 31:** ແຜນກິດຈະກຳຊຸມຊົນ 4.....245

**ພາກ ສ: ຈຸດສຳຄັນຂອງການເປັນຄູຝຶກ...248**

ການເປັນຄູຝຶກທີ່ດີ.....250

ການເປັນຄູຝຶກໄວໜຸ່ມທີ່ດີ.....251

ເດັກດ້ອຍໂອກາດ.....252

ການປະຊຸມສະໂມສອນເດັກ.....253

ສະຖານທີ່ສະໂມສອນເດັກ.....254

ລະບົບດາວ.....255

ການດັດປັບເຄື່ອງມືໃຫ້ຜູ້ທີ່ອ່ານບໍ່ເປັນ.....256

ການຕິດຕາມສະໂມສອນເດັກ.....257

ການເປັນຄູຝຶກທີ່ດີ.....258

ການໂອລົມກ່ຽວກັບຫົວຂໍ້ທີ່ຄວນລະວັງ.....259

ການແກ້ໄຂຕໍ່ຜູ້ທີ່ມີຄວາມກົດດັນ.....260

ຄຳສັບຕ່າງໆ.....261

**ເອກະສານຊ້ອນທ້າຍ ກ:** ລະບຽບການປົກປ້ອງເດັກຂອງອົງການສຸພະນິມິດສາກົນ.....263

**ເອກະສານຊ້ອນທ້າຍ ຂ:** ແຜນການໂຕ້ຕອບໃນກໍລະນີທີ່ມີເດັກ.....271

**ເອກະສານຊ້ອນທ້າຍ ຄ:** ອຸປະກອນທີ່ຕ້ອງການເຂົ້າໃນການນຳໃຊ້ເຄື່ອງມືນີ້.....272

# ໝາຍເຫດໃນການໃຊ້ຖ້ອຍຄຳ

ຕະຫຼອດຫຼັກສູດນີ້ຄຳວ່າ **"ຜູ້ຖືກເຄາະຮ້າຍ"** ແມ່ນໃຊ້ກັບຜູ້ທີ່ຖືກເຄາະຮ້າຍຈາກການຄ້າມະນຸດນີ້ກໍ່ເພາະວ່າມີທ່າອ່ຽງທີ່ຈະຕຳນິແຮງງານເຄື່ອນຍ້າຍ. ອັນນີ້ກໍ່ມີແນວໂນ້ມທີ່ຈະເກີດຂື້ນກັບຜູ້ເຄື່ອນຍ້າຍແຮງງານ, ຜູ້ເຊິ່ງຖືກຄ້າມະນຸດກັບສິ່ງທີ່ເກີດຂື້ນກັບເຂົາ. ຄຳວ່າຜູ້ຖືກເຄາະຮ້າຍແມ່ນໄດ້ເຄີຍໃຊ້ກັບຜູ້ທີ່ວ່າບັນດາຜູ້ເຄື່ອນຍ້າຍແຮງງານນັ້ນ. ຈະບໍ່ຮັບຜິດຊອບຕໍ່ການຖືກຄ້າມະນຸດ.

ຄຳຖາມ **"ໂສເພນີ"** ແມ່ນໃຊ້ຕະຫຼອດຫຼັກສູດນີ້. ນີ້ກໍ່ເພາະວ່າຫຼັກສູດນີ້ໄດ້ກ່າວເຖິງສະຖານະການ ເຊິ່ງເດັກນ້ອຍໄດ້ຖືກບັງຄັບໃຫ້ເຮັດວຽກໃນຮ້ານຂາຍບໍລິການ, ຄຳວ່າຜູ້ຂາຍບໍລິການທາງເພດ

ສະແດງວ່າ: ແມ່ນການເຮັດວຽກຢູ່ໃນຮ້ານຂາຍບໍລິການ. ສຳລັບເດັກນ້ອຍຜູ້ທີ່ຖືກລອກຫລວງເຂົ້າໄປໃນຮ້ານບໍລິການ, ມັນບໍ່ແມ່ນຄວາມຈິງທີ່ບັນດາເດັກເຫລົ່ານັ້ນກໍ່ບໍ່ໄດ້ເລືອກທີ່ຈະເຮັດວຽກໃນຮ້ານບໍລິການເຫຼົ່ານັ້ນທີ່ວ່າບໍ່ມີອິດສະຫຼະໃນການລາອອກ ແລະ ບໍ່ໄດ້ຮັບການຈ່າຍເງິນເປັນປະຈຳ. ມີຫຼາຍກໍລະນີສຶກສາຢູ່ໃນຫຼັກສູດນີ້ໄດ້ເອົາເລື່ອງຈາກຊີວິດຈິງຂອງຜູ້ເຄື່ອນຍ້າຍແຮງງານເພື່ອປົກປິດຄວາມລັບ ແລະ ປ້ອງກັນການສັບສົນ, ທຸກໆຄົນທີ່ໄດ້ກ່າວມາໃນກໍລະນີສຶກສາແມ່ນອີງໃສ່ຂໍ້ມູນເດີມ.

*ອົງການ ສປຊ ເພື່ອແມ່ ແລະ ເດັກ, ປື້ມຄູ່ມືກ່ຽວກັບການປະຕິບັດງານສົນທິສັນຍາວ່າດ້ວຍການຂາຍເດັກນ້ອຍ, ເດັກຂາຍບໍລິການທາງເພດ ແລະ ພາບອານາຈານເດັກ ສປຊ ແມ່ ແລະ ເດັກສູນວິໃຈຄົ້ນຄ້ວາຂອງ ສປຊແມ່ ແລະ ເດັກ.*

# ການແນະນຳ



ການເຄື່ອນຍ້າຍແຮງງານທີ່ປອດໄພສຳລັບສະໂມສອນເດັກ SNCC ແມ່ນການອອກແບບນຳໃຊ້ເຂົ້າໃນສະໂມສອນເດັກຂັ້ນບ້ານເພື່ອປະກອບສ່ວນເຂົ້າໃນການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ, ໂດຍຜ່ານການໃຫ້ຄວາມຮູ້ແກ່ສະມາຊິກອື່ນໆ. ຂອງສະໂມສອນໃນການປົກປ້ອງຕົວພວກເຂົາເອງ ແລະ ເພື່ອນໆ. SNCC ປະຕິບັດການຢູ່ໃນປະເທດຈີນ, ຫວຽດນາມ, ພະມ້າ, ໄທ, ກຳປູເຈຍ ແລະ ລາວ ເຮັດວຽກກັບເດັກຜູ້ດ້ອຍໂອກາດໃນເກນອາຍຸ 12-17 ປີ ເຊິ່ງມາຈາກຊຸມຊົນຕ່າງໆທີ່ມີການເຄື່ອນຍ້າຍແຮງງານ ຫຼື ມີການຄ້າມະນຸດສູງ.

ຄຽງຄູ່ກັບການນຳໃຊ້ຄູ່ມືດັ່ງກ່າວ ບັນດາຄູຝຶກທີ່ເປັນເດັກນ້ອຍ ແລະ ຜູ້ໃຫຍ່ກໍ່ຈະໄດ້ສະໜອງຂໍ້ມູນທີ່ຈຳເປັນໃນການຈັດຕັ້ງ ແລະ ດຳເນີນສະໂມສອນເດັກ. ເຄື່ອງມືດັ່ງກ່າວນີ້ຍັງໄດ້ອະທິບາຍເຖິງໜ້າວຽກຕ່າງໆຂອງສະໂມສອນເດັກ, ຂໍ້ແນະນຳເພື່ອກະກຽມ ແລະ ການສ້າງສະໂມສອນເດັກ. ໃນການຈັດ ແລະ ສ້າງຕັ້ງສະໂມສອນເດັກ, ຄູ່ຮ່ວມງານອົງການສຸພະນິມິດ ແລະ ຊຸມຊົນທ້ອງຖິ່ນຕ້ອງໄດ້ຊອກຫາຜູ້ທີ່ມີເງື່ອນໄຂບັນດາຜູ້ເຂົ້າຮ່ວມ ແລະ ຜູ້ທີ່ຈະມາເປັນຄູຝຶກ.

ກ່ອນຈະເລີ່ມຕົ້ນຝຶກເຄື່ອງມືນີ້, ພະນັກງານອົງການສຸພະນິມິດ, ຄູຝຶກທີ່ເປັນເດັກນ້ອຍ ແລະ ພໍ່ແມ່ຕ້ອງໄດ້ມາປຶກສາຫາລືກ່ຽວກັບເນື້ອໃນເຄື່ອງມືຂອງສະໂມສອນເດັກ. ທຸກຄົນຕ້ອງໄດ້ຕັດສິນໃຈໃນບາງຫົວຂໍ້ທີ່ຈະຕ້ອງຄຳນຶງຢ່າງຖີ່ຖ້ວນວ່າຫົວຂໍ້ທີ່ບໍ່ເໝາະສົມຄວນຕັດອອກໄປ, ເນື່ອງຈາກບາງຫົວຂໍ້ອາດບໍ່ເໝາະສົມທີ່ຈະເອົາມາລົມກັບເດັກທີ່ບໍ່ເຖິງເກນອາຍຸ, ຫຼື ບາງຫົວຂໍ້ທີ່ບໍ່ເໝາະສົມກັບວັດທະນະທຳຂອງກຸ່ມຄົນໃດໜຶ່ງ. ທັງພໍ່ແມ່ຜູ້ປົກຄອງ ແລະ ເດັກຕ້ອງໄດ້ໃຫ້ເຊັນໃບຍິນຍອມກ່ອນເລີ່ມເຂົ້າຮ່ວມຝຶກອົບຮົມການເຄື່ອນຍ້າຍແຮງງານທີ່ປອດໄພຂອງສະໂມສອນເດັກ. ບັນດາກຸ່ມຜູ້ປົກຄອງຈະຕ້ອງໄດ້ຈັດຕາຕະລາງເວລາສຳລັບການມາປະຊຸມແຕ່ລະຄັ້ງ. ໂດຍອີງໃສ່ຄວາມຕ້ອງການຂອງເດັກນ້ອຍ.ຄວາມຈິງແລ້ວ SNCC ຕ້ອງໄດ້ດຳເນີນຢູ່ປະມານ (75 ນາທີ ), ອາທິດລະຄັ້ງ ຫຼື, ສອງທິດຕໍ່ເທື່ອ. ກວມເອົາປະມານ 8 ຫາ 16 ເດືອນ. ເຖິງຢ່າງໃດກໍ່ຕາມເຄື່ອງມືສາມາດດັດແປງໃນການສອນເພື່ອຢືດເວລາສອນໃນມື້ຕໍ່ໆໄປ, ເພື່ອໃຫ້ເດັກນ້ອຍທີ່ບໍ່ໄດ້ມາຮ່ວມໃນແຕ່ລະອາທິດຕາມຕາຕະລາງການສອນ. ເພື່ອໃຫ້ໂອການກັບເດັກຜູ້ທີ່ບໍ່ສາມາດມາຮ່ວມເປັນລາຍອາທິດໄດ້.

ແລະ ແລ້ວເຄື່ອງມືດັ່ງກ່າວກໍ່ຈະໄດ້ນຳໄປຝຶກໃຫ້ຄູຝຶທີ່ເປັນເດັກ ແລະ ຜູ້ໃຫຍ່, ຜູ້ທີ່ຈະໄດ້ເຮັດວຽກແບບອາສາສະໝັກ. ມັນລວມມີ 30 ບົດຮຽນລວມທັງກິດຈະກຳອົບອຸ່ນຮ່າງກາຍທີ່ຂຽນໄວ້ໃນບົດທຳອິດຂອງຄູ່ມື. ເຄື່ອງມືນີ້ຈະຊ່ວຍໃຫ້ເດັກນ້ອຍໄດ້ຮັບຄວາມຮູ້ ແລະ ທັກສະ, ເດັກນ້ອຍຈະພັດທະນາຄວາມຮູ້ຂອງພວກເຂົາໂດຍສະເພາະແມ່ນໄພອັນຕະລາຍຈາກການຄ້າມະນຸດ,ຮັບຮູ້ກົດໝາຍຕ່າງໆ.ທີ່ກ່ຽວພັນກັບການຄ້າມະນຸດ ແລະ ຄວາມຮູ້ຈິງທີ່ພວກເຂົາຈະນຳໃຊ້ເຂົ້າໃນການປົກປ້ອງຕົວຂອງພວກເຂົາເອງ, ເຊັ່ນວ່າການສ້າງເຄືອຄ່າຍ ຫຼື ຮຽນຮູ້ກ່ຽວກັບສາຍດ່ວນທີ່ໃຫ້ການຊ່ວຍເຫຼືອໃນວຽກເຫຼົ່ານີ້. ໃນເວລາດຽວກັນ, ເດັກກໍ່ຍັງໄດ້ຮຽນຮູ້ການນຳໃຊ້ທັກສະຊີວິດສະເພາະຈາກເລື່ອງການຄ້າມະນຸດ, ເພື່ອໃຫ້ເດັກມີທັກສະໃນການເອົາຕົວລອດ.

ພາກສ່ວນໜຶ່ງຂອງເຄື່ອງມືສະບັບນີ້ກໍ່ຍັງມີປື້ມຄູ່ມືອີກສະບັບໜຶ່ງ ເຊິ່ງເປັນປື້ມນ້ອຍທີ່ຈະຕ້ອງໄດ້ຢາຍໃຫ້ຜູ້ເຂົ້າຮ່ວມສະໂມສອນເດັກ, ມັນມີຂະໜາດເທົ່າກັນກັບໜັງສືຜ່ານແດນ (ປັດສະປໍ) ທີ່ບັນຈຸຂໍ້ມູນທີ່ສຳຄັນກ່ຽວກັບການເຄື່ອນຍ້າຍແຮງງານທີ່ບັນດາເດັກນ້ອຍຄວນຮັກສາໄວ້ເປັນແຫຼ່ງຂໍ້ມູນ.

# ພາກ ກະ
# ການສ້າງຕັ້ງ
# ສະໂມສອນເດັກ



# ໃບຍິນຍອມ: ສຳລັບພໍ່ແມ່ ຫຼື ຜູ້ປົກຄອງຂອງ ໄວໜຸ່ມທີ່ມາຮ່ວມກິດຈະກຳສະໂມສອນເດັກ




## ຂໍ້ແນະນຳໃນການໃຊ້:

ບັນດາພໍ່ແມ່/ຜູ້ປົກຄອງຄວນເຊັນ ໃບຍິນຍອມ ກ່ອນການມາຮ່ວມກິດຈະກຳສະໂມສອນເດັກ. ຖ້າເຈົ້າຫາກໄດ້ຕັດສິນໃຈບໍ່ເຂົ້າຮ່ວມສະໂມສອນເດັກກໍ່ໃຫ້ປະຕິເສດເບື້ອງຕົ້ນຂອງກອງປະຊຸມ, ເຈົ້າສາມາດຂີດຂ້າບົດຮຽນດັ່ງກ່າວນີ້ອອກ, ກ່ອນທີ່ຈະເອົາແບບຟອມດັ່ງກ່າວນີ້ໃຫ້ຜູ້ປົກຄອງ ແລະ ພໍ່ແມ່ເຊັນ.

ຊື່.......................................................................................................................................

ວັນທີ....................................................................................................................................

ຊື່ພໍ່ແມ່ຜູ້ປົກຄອງ:.......................................................................................................................

ລາຍເຊັນພໍ່ແມ່:...........................................................................................................................



## ແບບຟອມຍິນຍອມ:

ສະໂມສອນເດັກຂໍເຊີນລູກຂອງທ່ານມາຮ່ວມສະໂມສອນເດັກ ຫຼື ສອງອາທິດຕໍ່ເທື່ອ ບ່ອນທີ່ທ້າວ, ນາງ ຈະໄດ້ມາຮ່ວມຢ່າງຕື່ນເຕັ້ນໃນກິດຈະກຳພ້ອມກັບບັນດາເດັກນ້ອຍປະມານ 20 ຫາ 30 ຄົນ ໃນບ່ອນທີ່ມີຄວາມປອດໄພ. ການປະຊຸມຂອງສະໂມສອນເດັກນີ້ຈະນຳພາໂດຍຄູຝຶກທີ່ເປັນຜູ້ໃຫຍ່ ແລະ ຄູຝຶກເດັກນ້ອຍ, ຜູ້ທີ່ຈະນຳພາໃນການຝຶກແອບຫຼິ້ນກິດຈະກຳຕ່າງໆ. ສະໂມສອນເດັກຈະຕ້ອງດຳເນີນໄປເປັນເວລາ 8 ເດືອນຈຶ່ງຈະຈົບລົງ.

ສະໂມສອນນີ້ຈະຊ່ວຍໃຫ້ລູກຂອງທ່ານຮຽນຮູ້ຂໍ້ມູນກ່ຽວກັບ:

- ທັກສະຊີວິດ, ລວມທັງການສື່ສານ ແລະ ການບໍລິຫານອາລົມທີ່ດີ.
- ກ່ຽວກັບການຄ້າມະນຸດແມ່ນຫຍັງ?
- ການຄ້າກ່ຽວກັບການຫາລຸນທາງເພດຂອງເດັກ.
- ບົດບາດຂອງຮ້ານບໍລິການທີ່ກ່ຽວຂ້ອງກັບການຄ້າມະນຸດ.
- ກົດໝາຍກ່ຽວກັບການຄ້າມະນຸດ ແລະ ສິດທິຕ່າງໆ.
- ການຈຳແນກເພດ ແລະ ການຄ້າມະນຸດ.
- ໄພອັນຕະລາຍຂອງຢາເສບຕິດ, ສຸລາ ແລະ ການຄ້າມະນຸດ.
- ການວາງແຜນການເຄື່ອນຍ້າຍແຮງງານທີ່ປອດໄພ.
- ການມາຮ່ວມສະໂມສອນຂອງລູກຂອງທ່ານໃນຄັ້ງນີ້ ດ້ວຍຄວາມສະໝັກໃຈ, ເຈົ້າສາມາດບໍ່ໃຫ້ລູກຂອງເຈົ້າມາເຂົ້າຝຶກອົບຮົມໃນເວລາໃດກໍ່ໄດ້.
- ໃນລະຫວ່າງການຝຶກນີ້ລູກຂອງເຈົ້າມີສິດທີ່ຈະຕອບຄຳຖາມອັນທີ່ຕ້ອງການທີ່ຈະຕອບກໍ່ໄດ້, ຖ້າລູກຂອງເຈົ້າບໍ່ສາມາດເວົ້າ ກໍ່ມີສິດນັ່ງງຽບໆກໍ່ໄດ້.
- ລູກຂອງເຈົ້າອາດບໍ່ເຂົ້າຮ່ວມວາງແຜນປະຕິບັດກິດຈະກຳໃນຊຸມຊົນກໍ່ໄດ້, ເຈົ້າອາດບອກໃຫ້ລູກຂອງຂອງເຈົ້າຢຸດເຂົ້າຮ່ວມຍາມໃດກໍ່ໄດ້.
- ຖ້າລູກຂອງເຈົ້າຕັດສິນໃຈໃນການມີສ່ວນຮ່ວມໃນກິດຈະກຳຊຸມຊົນ, ລູກຂອງເຈົ້າສາມາດເປັນຜູ້ຊ່ວຍກໍ່ໄດ້ ແລະ ບໍ່ໄດ້ເຂົ້າຮ່ວມໝົດທຸກກິດຈະກຳຂອງສາທາລະນະຊົນ.

### ອ່ານ ແລະ ລົງລາຍເຊັນກ່ອນເຂົ້າຮ່ວມຝຶກອົບຮົມສະໂມສອນເດັກ.

ຂ້າພະເຈົ້າໄດ້ອ່ານ ແລະ ເຂົ້າໃຈທຸກເນື້ອໃນຂ້າງເທິງນັ້ນ.

ລູກຂອງຂ້າພະເຈົ້າສາມາດເຂົ້າຮ່ວມໃນການຝຶກຄັ້ງນີ້. ຂ້າພະເຈົ້າສາມາດບອກລູກຂອງຂ້າພະເຈົ້າຢຸດຈາກການຝຶກໄດ້ຕະຫຼອດເວລາ.

**ຍິນຍອມ** **ບໍ່ຍິນຍອມ**

ຊື່.......................................................................................................................................

ວັນທີ....................................................................................................................................

ຊື່ເດັກນ້ອຍ:.............................................................................................................................

ລາຍເຊັນເດັກນ້ອຍ:.......................................................................................................................

# ການນຳໃຊ້ ແບບຟອມປະເມີນຕົນເອງ

**ຫຼັງຈາກການດຳເນີນແຕ່ລະຕອນຂອງການຝຶກອົບຮົມ, ຜູ້ຊ່ວຍທີ່ເປັນຜູ້ໃຫຍ່ຕ້ອງໄດ້ຕື່ມໃສ່ແບບຟອມສະບັບນີ້, ເພື່ອປະເມີນບົດຮຽນ. ແບບຟອມນີ້ໄດ້ອອກແບບເປັນລາຍການ, ດັ່ງນັ້ນກໍ່ສາມາດຕື່ມໃສ່ໄດ້ຢ່າງງ່າຍດາຍ.**

ແບບຟອມນີ້ຄູຝຶກຈະຕ້ອງເປັນຜູ້ຕື່ມໃສ່.

ແບບຟອມສະບັບນີ້ສາມາດຊ່ວຍເຮົາໄດ້ຫຼາຍໆທາງ:

- ສາມາດຊ່ວຍໃຫ້ຄູຝຶກໄດ້ຈຳສິ່ງທີ່ໄດ້ຮຽນຮູ້ໃນການຝຶກອົບຮົມ.
- ສາມາດຊ່ວຍໃຫ້ຄູຝຶກນຳໄປປັບປຸງໃນຕໍ່ໜ້າ.
- ສາມາດຊ່ວຍໃຫ້ຄູຝຶກໃນການລະບຸບັນຫາເພື່ອປຶກສາຫາຫລືກັບຜູ້ບັງຄັບບັນຊາພວກເຂົາ.

ພວກເຮົາຂໍໃຫ້ບັນດາຄູຝຶກເລົ່ານັ້ນຈົ່ງມີຄວາມຊື່ສັດໃນແບບຟອມ.ສິ່ງເຫຼົ່ານີ້ບໍ່ແມ່ນການທົດສອບ. ໃນແບບຟອມນີ້ບໍ່ໄດ້ລະບຸເຖິງຊື່ ຫຼື ຄູຝຶກຂອງສະໂມສອນເດັກນີ້ກໍ່ໝາຍຄວາມວ່າອົງການສຸພະນິມິດເລືອກທີ່ຈະໃຊ້ແບບຟອມເພື່ອປະເມີນ SNT ໃນສຸດທ້າຍ, ອົງການສຸພະນິມິດຈະບໍ່ສາມາດລະບຸໄດ້, ຄູຝຶກຜູ້ໃດທີ່ຕື່ມແບບຟອມນີ້, ຫຼື ສະໂມສອນນີ້ມາຈາກໃສ. ພວກເຮົາເຮັດຈັ່ງຊີ່ກໍ່ເພື່ອຢາກໃຫ້ຄູຝຶກຈົ່ງຕື່ມດ້ວຍຄວາມຊື່ສັດ. ເພາະມັນຈະຊ່ວຍສ່ອງແສງໃຫ້ພວກເຮົາເຫັນບັນຫາຕ່າງໆເພື່ອປັບປຸງ SNT ແລະ ເຄື່ອງມືການເຄື່ອນຍ້າຍແຮງງານທີ່ປອດໄພ.



# ແບບຟອມ ການປະເມີນຄູຝຶກ

ຈົ່ງຕື່ມແບບຟອມນີ້ເມື່ອເວລາຈົບບົດຮຽນ. ໃຊ້ເວລາປະມານ 5 ນາທີ

| | | |
|---|---|---|
| ມີຈັກຄົນມາເຂົ້າຮ່ວມຝຶກອົບຮົມຄັ້ງນີ້? | ຊາຍ:............... | ຍິງ:...... |
| ຖ້າມີຫຼາຍຄົນບໍ່ມາເຂົ້າຮ່ວມ, ທ່ານຮູ້ບໍ່ວ່າເປັນຫຍັງ? | ☐ເຈົ້າ | ☐ບໍ່ |
| ທ່ານຄວນເຮັດແນວໃດກັບເລື່ອງນີ້? | | |
| ທ່ານໄດ້ສອນໝົດບົດຮຽນນີ້ບໍ? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ໄດ້ສອນໝົດ, ຈົ່ງອະທິບາຍວ່າຍ້ອນຫຍັງ? | | |
| ທ່ານໄດ້ສອນຕາມເວລາກຳນົດບໍ່? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ແລ້ວຕາມເວລາທີ່ກຳນົດໄວ້ຍ້ອນຫຍັງ? | | |
| ທ່ານໄດ້ປະຕິບັດຕາມໂຄງສ້າງຂອງເຄື່ອງມືນີ້ບໍ? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ປະຕິບັດຕາມ,ຈົ່ງອະທິບາຍວ່າເປັນຫຍັງ? | | |
| ທ່ານໄດ້ສຶດສອນໝົດຄວາມສາມາດແລ້ວບໍ? | ☐ເຈົ້າ | ☐ບໍ່ |
| ທ່ານໄດ້ກຳນົດເວລາໃນການສອນບໍ? | ☐ເຈົ້າ | ☐ບໍ່ |
| ເດັກທຸກໆຄົນໄດ້ເຂົ້າຮ່ວມກິດຈະກຳໝົດບໍ່? | ☐ເຈົ້າ | ☐ບໍ່ |
| ເດັກນ້ອຍໄດ້ໃຊ້ການສື່ສານທີ່ສຸພາບໃນການປະກອບຄຳຄິດຄຳເຫັນ? | ☐ເຈົ້າ | ☐ບໍ່ |
| ເດັກນ້ອຍຜູ້ທີ່ອ່ານບໍ່ເປັນກໍ່ໄດ້ມາເຂົ້າຮ່ວມບໍ? | ☐ເຈົ້າ | ☐ບໍ່ |
| ເດັກພິການໄດ້ມາຮ່ວມບໍ? ຖ້າສາມາດມາ ພວກເຂົາມາໄດ້ແນວໃດ? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ມາ, ຍ້ອນຫຍັງ? | | |
| ຄູຝຶກເດັກໄດ້ນຳພາກິດຈະກຳໃດໜຶ່ງບໍ່? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ນຳພາ, ຍ້ອນຫຍັງ? | | |
| ຖ້າບໍ່ໄດ້ດຳເນີນຕາມແຜນ, ເປັນຫຍັງ? | ☐ເຈົ້າ | ☐ບໍ່ |
| ບັນດາຜູ້ເຂົ້າຮ່ວມໄດ້ສະແດງຄວາມເຂົ້າໃຈໃນຫົວຂໍ້ບໍ? | ☐ເຈົ້າ | ☐ບໍ່ |
| ຖ້າບໍ່ເຂົ້າໃຈ, ຍ້ອນຫຍັງ? | | |
| ທ່ານໄດ້ພົບບັນຫາຫຍັງໃນການດຳເນີນຝຶກອົບຮົມຄັ້ງນີ້? | ☐ເຈົ້າ | ☐ບໍ່ |
| ຖ້າມີຈົ່ງອະທິບາຍ | | |
| ທ່ານມີຄຳເຫັນຫຍັງຢາກເພີ່ມຕື່ມ? | ☐ເຈົ້າ | ☐ບໍ່ |
| ທ່ານມີແຜນຫຍັງທີ່ຈະດຳເນີນຕ່າງຈາກນີ້ ໃນບົດຮຽນຕໍ່ໜ້າ? | ☐ເຈົ້າ | ☐ບໍ່ |

# ການສ້າງທີມ ກິດຈະກຳນຳໃຊ້ໃນການອົບອຸ່ນຮ່າງກາຍ

**ບັນດາກິດຈະກຳເຫຼົ່ານີ້ມີຈຸດປະສົງທີ່ຈະຕ້ອງໄດ້ນຳໃຊ້ອົບອຸ່ນຮ່າງກາຍກ່ອນເລີ່ມຕົ້ນຂອງທຸກໆບົດຮຽນ. ກິດຈະກຳດັ່ງກ່າວນີ້ຈະໄດ້ໝູນໃຊ້ຫຼາຍຄັ້ງຕະຫຼອດເຄື່ອງມືສະບັບນີ້.**

## ກິດຈະກຳອົບອຸ່ນຮ່າງກາຍ1: ຈັດແຖວໂດຍອີງໃສ່...........

### ຈຸດປະສົງ:

ຊ່ວຍໃຫ້ຜູ້ເຂົ້າຮ່ວມສ້າງສາຍສຳພັນດ້ວຍຄວາມມ່ວນຊື່ນ ແລະ ອົບອຸ່ນຮ່າງກາຍ

### ເວລາ:

5 – 10 ນາທີ

**ອຸປະກອນ**

(ບໍ່ມີ)

### ກິດຈະກຳ:

1.ແບ່ງຜູ້ເຂົ້າຮ່ວມແບ່ງເປັນກຸ່ມ 5 - 6 ຄົນ.

2.ໃຫ້ກຸ່ມລຽນແຖວຕາມລຳດັບ, ຕາມໝວດຕໍ່ໄປນີ້:

- ເກມລວງສູງ: ຜູ້ຕ່ຳຢູ່ໜ້າຜູ້ສູງຢູ່ຫຼັງ
- ເກມອາຍຸ: ຜູ້ອາຍຸຫຼາຍຢູ່ກ່ອນອາຍຸນ້ອຍຢູ່ຫຼັງ.
- ເກມວັດແທກຂະໜາດຂອງຕີນ.
- ໄລຍະທາງທີ່ໄປໃນການມາປະຊຸມ
- ເກມຈຳນວນຂຶ້ນລົດ ຫຼື ຍົນຫຼາຍຕໍ່

3.ເມື່ອໄດ້ຍິນສຽງສັນຍານດັງຂຶ້ນ, ແຕ່ລະກຸ່ມລຽນແຖວແລ້ວອີງຕາມໝວດ ແລະ ກຸ່ມນັ່ງລົງເມື່ອສຳເລັດ.

4.ເພື່ອສ້າງຄວາມທ້າທາຍ, ຜູ້ເຂົ້າຮ່ວມສາມາດແຂ່ງຂັນໂດຍປັດສະຈາກການເວົ້າກັນ.

5.ກວດຄວາມຖືກຕ້ອງແລ້ວໃຫ້ຄະແນນ.

6.ເມື່ອທີມໃດສຳເລັດກ່ອນ, ພ້ອມທັງຖືກຕ້ອງແລ້ວ ແມ່ນໄດ້ຄະແນນກ່ອນ.

7.ຄູຝຶກອາດຫຼິ້ນເກມຕາມໝວດດັ່ງຕໍ່ໄປນີ້,ແຕ່ຕ້ອງອີງໃສ່ເວລາທີ່ມີຢູ່ເມື່ອກຸ່ມໄດ້ຮຽນຮູ້ເລື່ອງຫຼິ້ນເກມແລ້ວ, ຜູ້ເຂົ້າຮ່ວມອາດສະເໜີຕົວຢ່າງເກມຕໍ່ໄປ.



# ກິດຈະກຳອົບອຸ່ນຮ່າງກາຍ 2: ເກມໝາກບານເພື່ອຮຽນຊື່

**ຈຸດປະສົງ: ເຮັດໃຫ້ຜູ້ເຂົ້າຮ່ວມຮູ້ຈັກເຊິ່ງກັນ ແລະ ກັນ, ສ້າງສາຍສຳພັນ, ມ່ວນຊື່ນ ແລະ ອົບອຸ່ນຮ່າງກາຍ**

### ເວລາ:

5 – 10 ນາທີ

**ອຸປະກອນ**

(ໝາກບານ)

### ກິດຈະກຳ:

1.ຢືນອ້ອມເປັນວົງມົນ

2.ຖືໝາກບານໄວ້ໃນມືຂອງທ່ານ

3.ໃນຂະນະທີ່ໂຍນບານຢູ່ນັ້ນໃຫ້ເວົ້າຊື່ຕົນເອງ, ເວົ້າຊື່ຕົນເອງແລ້ວໂຍນບານຫາຜູ້ອື່ນໆ.

4.ເຮັດໄປເລື້ອຍໆຈົນກະທັ້ງທຸກໆຄົນໄດ້ເວົ້າຊື່ຕົນເອງໝົດທຸກຄົນ.

5.ເຮັດຄືນໃໝ່,ແຕ່ວ່າຄົນໜຶ່ງໃຫ້ເວົ້າຊື່ຂອງພວກເຂົາ, ໃຫ້ຄົນໜຶ່ງເອີ້ນຊື່ຜູ້ນັ້ນພ້ອມທັງໂຍນບານໃສ່, ທວນຄືນອີກເລື້ອຍໆຈົນກະທັ້ງທຸກຄົນໄດ້ຮຽກຊື່ເຊິ່ງກັນ ແລະ ກັນ.

6.ຖ້າຍັງມີເວລາ,ແຕ່ລະຄົນສາມາດເວົ້າຊື່ຂອງຕົນເອງ,ແລະ ບາງສິ່ງທີ່ເຂົາມັກ. ເກມນີ້ອາດສາມາດຫຼິ້ນໄດ້ອີງຕາມລະດັບ (ເວົ້າຊື່ໝາກໄມ້ທີ່ທ່ານມັກເກມໝາກບານ, ຫຼື ຮ້ອງເພງ.)

# ກິດຈະກຳອົບອຸ່ນຮ່າງກາຍ 3: ບາງສິ່ງບາງຢ່າງທີ່ອາດບໍ່ຮູ້

**ຈຸດປະສົງ:** ໃຫ້ຜູ້ເຂົ້າຮ່ວມຮູ້ຈັກເຊິ່ງກັນ ແລະ ກັນ, ສ້າງສາຍສຳພັນ, ມ່ວນຊື່ນ, ອົບອຸ່ນຮ່າງກາຍ.

**ເວລາ:**

5 – 10 ນາທີ

**ອຸປະກອນ**

(ບໍ່ມີ)

**ກິດຈະກຳ:**

1.ໃຫ້ຜູ້ເຂົ້າຮ່ວມຢືນລຽງແຖວ

2.ໃຫ້ຜູ້ເຂົ້າຮ່ວມຍ່າງຂ້າມໄປຫ້ອງອື່ນ, ເພື່ອໃຫ້ຕົວຢ່າງສິ່ງໃດສິ່ງໜຶ່ງກ່ຽວກັບພວກເຂົາເຊິ່ງວ່າຄົນອື່ນອາດບໍ່ຮູ້ນຳ.

**ຕົວຢ່າງ:**

- ຂ້າພະເຈົ້າໄດ້ໄປຢ້ຽມນະຄອນຫຼວງມາແລ້ວຄັ້ງໜຶ່ງ
- ຂ້ອຍມັກກະແລັມ
- ຂ້ອຍສາມາດກະດິກຫູຂອງຂ້ອຍ.
- ຂ້ອຍຫຼິ້ນບານເປັນຜູ້ຮັກສາປະຕູ

3.ຖ້າຜູ້ໃດໜຶ່ງຫຼິ້ນເກມດຽວກັນນີ້ຄວນແລ່ນຂ້າມໄປຮ່ວມກັບຜູ້ທຳອິດ

4. ແລະ ແລ້ວທຸກຄົນກໍ່ກັບຄືນສູ່ແຖວເດີມ

5. ທວນຄືນເລື້ອຍໆຫຼາຍຄັ້ງຕາມທີ່ທ່ານສາມາດເຮັດໄດ້.



# ກິດຈະກຳອົບອຸ່ນຮ່າງກາຍ 4: ເກມໝາກບານເພື່ອທວນຄວາມຈຳ

**ຈຸດປະສົງ:** ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມໄດ້ຮູ້ຈັກເຊິ່ງກັນ ແລະ ກັນ, ສ້າງສາຍສຳພັນ, ສ້າງຄວາມມ່ວນຊື່ນ ແລະ ອົບອຸ່ນຮ່າງກາຍ. ເກມດັ່ງກ່າວໃຊ້ເພື່ອທວນຄືນບົດຮຽນຈາກຄັ້ງກ່ອນ ແລະ ທວນຄືນຫົວຂໍ້ທີ່ໄດ້ສົນທະນາໃນຄັ້ງກ່ອນ

**ເວລາ:**

5 – 10 ນາທີ

**ອຸປະກອນ**

(ບານ)

**ຈຸດປະສົງ:**

1.ແບ່ງເປັນກຸ່ມນ້ອຍໆ ກຸ່ມລະ 4 ຄົນ

2.ໝົດທຸກຄົນຢືນເປັນວົງມົນ, ພ້ອມດ້ວຍສະມາຊິກ. ແຕ່ລະກຸ່ມນ້ອຍນັ້ນຢືນໃກ້ກັນ.

3.ດຶກໝາກບານໃສ່ແຕ່ລະກຸ່ມ. ຖາມຄຳຖາມພວກເຂົາຕາມລາຍການລຸ່ມນີ້.

**ກຸ່ມອື່ນໆອາດກວດສອບຄວາມຖືກຕ້ອງ.**

4.ຖ້າພວກເຂົາຫາກຕອບຖືກ,ພວກເຂົາກໍ່ສາມາດໄດ້ຄະແນນ. ຖ້າບໍ່ຖືກ,ຄູຝຶກໂຍນບານໃຫ້ກຸ່ມອື່ນໆຜູ້ທີ່ມີຄວາມສາມາດຕອບຄຳຖາມ.

5.ສືບຕໍ່ແບບດຽວກັນຈົນກະທັ້ງຄຳຖາມໄດ້ຖືກຖາມໝົດ.

# ກິດຈະກຳອົບອຸ່ນຮ່າງກາຍ 5: ຄຳຖາມປິດສະໜາ

**ຈຸດປະສົງ: ເພື່ອຊ່ວຍໃຫ້ຜູ້ເຂົ້າຮ່ວມທວນຄືນເນື້ອໃນບົດຮຽນສະໄມສອນເດັກກ່ອນ ໃນແບບຄວາມມ່ວນ ຊື່ນ.**

**ເວລາ:**

5 – 10 ນາທີ

**ອຸປະກອນ**

ຄຳຖາມປິດສະໜາ,

ລາງວັນນ້ອຍຈຳນວນໜຶ່ງ

ເກມນີ້ບໍ່ຕ້ອງການກວມເອົາໝົດທຸກຄຳຖາມ.

ສາມາດຖາມຜູ້ເຂົ້າຮ່ວມຫຼາຍຄຳຖາມຕາມເວລາທີ່ເຈົ້າມີ.

ມີຫຼາຍຄຳຖາມທີ່ລຽງໄວ້ລຸ່ມນີ້, ທ່ານສາມາດຫຼິ້ນເກມຫຼາຍຄັ້ງໄດ້, ຫຼາຍຄຳຖາມທີ່ແຕກຕ່າງກັນ. ບັນດາຄຳຖາມເປັນຕົວເລກ, ສ່ວນຄຳຕອບໄດ້ໝາຍຫົວແຖວໄວ້ ແລະ ເປັນຕົວເນີ້ງ.

ມີຫຼາຍຄຳຖາມ ແລະ ຄຳຕອບຢູ່ຂ້າງລຸ່ມນີ້ທີ່ຍັງບໍ່ທັນຈະແຈ້ງນີ້ກໍ່ຕໍ່ເມື່ອທ່ານໄດ້ອ່ານໝົດບົດຮຽນທີ່ກ່ຽວເນື່ອງກັນ. ເຖິງຢ່າງໃດກໍ່ຕາມ, ເມື່ອທ່ານຫາກອ່ານໝົດຫຼັກສູດເຫຼົ່ານີ້ເລື່ອງລາວຕ່າງໆກໍ່ສາມາດແກ້ໄຂໄດ້. ພຽງແຕ່ທ່ານຫາກຕັ້ງຄຳຖາມທີ່ກ່ຽວຂ້ອງກັບບົດຮຽນພາຍຫຼັງທ່ານສຳເລັດການສິດສອນ.

ຖ້າຫາກກຸ່ມໃດຕອບຖືກ, ຄວນສົ່ງເສີມ, ບໍ່ຄວນເຮັດໃຫ້ສະມາຊິກກຸ່ມອາຍ. ນີ້ບໍ່ແມ່ນປິດສະໜາໃນໂຮງຮຽນ. ມັນແມ່ນຄຳຖາມເພື່ອຄວາມມ່ວນຊື່ນ.

**ຄຳຖາມຕ່າງໆ:**

**1.ການຄ້າມະນຸດໝາຍຄວາມວ່າແນວໃດ? ( ຈາກຕອນທີ 3 )**

*ຄຳຕອບ*

- *ການຄ້າມະນຸດແມ່ນການລອກລວງ ຫຼື ບັງຄັບຄົນອື່ນໃນຮູບແບບຂູດຮີດແຮງງານ,ເຊິ່ງຜູ້ເຄາະຮ້າຍດັ່ງກ່າວມີຄວາມຫຍຸ້ງຍາກລຳບາກ. ການຄ້າມະນຸດແມ່ນກ່ຽວຂ້ອງກັບການເອົາຜູ້ຖືກເຄາະຮ້າຍຈາກບ່ອນທີ່ພວກເຂົາດຳລົງຊີວິດຢູ່ພາໄປອີກບ່ອນອື່ນໆ ໂດຍການບັງຄັບເພື່ອຂູດຮີດແຮງງານ. ເຖິງຢ່າງໃດກໍ່ຕາມເຈົ້າຢູ່ບ່ອນເກົ່າກໍ່ສາມາດຖືກຫຼອກໄດ້.*

**2.ຄວາມແຕກຕ່າງລະຫວ່າງການຄ້າມະນຸດ ແລະ ການລັກລອບເຂົ້າເມືອງແຕກຕ່າງກັນແນວໃດ? (ຈາກຕອນທີ 3).**

ຄຳຕອບ

- *ການຄ້າມະນຸດແມ່ນແຕກຕ່າງກັບການລັກລອບເຂົ້າເມືອງ.ເມື່ອບຸກຄົນໜຶ່ງຫາກໄດ້ລັກລອບເຂົ້າເມືອງແລ້ວ,ພວກເຂົາໄດ້ຈ້າງບຸກຄົນໃດໜຶ່ງເພື່ອພາພວກເຂົາຂ້າມຊາຍແດນຢ່າງຜິດກົດໝາຍ. ເຖິງຢ່າງໃດກໍ່ຕາມບຸກຄົນຜູ້ທີ່ໄດ້ລັກລອບເຂົ້າເມືອງຈ່າຍເງິນເພື່ອທີ່ຈະເຄື່ອນຍ້າຍແຮງງານ ແລະ ບາງເທື່ອພວກເຂົາກໍ່ອາດຕິດໜີ້ພາຍຫຼັງທີ່ພາເຄື່ອນຍ້າຍແຮງງານແລ້ວ ຕາມປົກກະຕິການລັກລອບເຂົ້າເມືອງນີ້ເມື່ອພວກເຂົາໄປຮອດປະເທດປາຍທາງແມ່ນພວກເຂົາມີອິດສະຫຼະໃນການເດີນທາງໄປທາງໃດກໍ່ໄດ້. ຄົນຜູ້ທີ່ຖືກຄ້າມະນຸດແລ້ວແມ່ນບໍ່ມີອິດສະຫຼະເຊັ່ນນັ້ນ.ຄົນສ່ວນຫຼາຍແມ່ນເລືອກທີ່ຈະລັກລອບເຂົ້າເມືອງ. ພວກເຂົາບໍ່ຕ້ອງການທີ່ຈະເລືອກທາງໄປເພື່ອໃຫ້ຖືກຄ້າມະນຸດ.*

**3. ການຄ້າມະນຸດແມ່ນເກີດຂຶ້ນໄດ້ຢູ່ໃສແດ່? (ຈາກຕອນທີ 4)**

*ຄຳຕອບ*

- *ການຄ້າມະນຸດສາມາດເກີດຂຶ້ນໄດ້ທຸກບ່ອນ: ທີ່ບ້ານ, ລະຫວ່າງການເດີນທາງ ຫຼື ຢູ່ທີ່ປະເທດປາຍທາງເຈົ້າບໍ່ຕ້ອງການເພື່ອທີ່ຈະເດີນທາງໄປຖືກຄ້າມະນຸດດອກ.*

**4. ອັນໃດແມ່ນເລ່ກົນຂອງຜູ້ຄ້າມະນຸດ (ຈາກຕອນທີ 4 ແລະ 9).**

*ຄຳຕອບ*

- *ທຳທ່າເປັນນາຍໜ້າຈັດຫາງານທີ່ຖືກກົດໝາຍ.*
- *ຜູ້ຄ້າມະນຸດມາຕີສະນິດເປັນເພື່ອນ ຫຼື ມາສະເໜີຄວາມຊ່ວຍເຫຼືອໃຫ້.*
- *ຜູ້ຄ້າມະນຸດມັກສະເໜີວຽກງານທີ່ມີເງິນເດືອນສູງໆ.ສະເໜີເງິນເດືອນສູງໆກວ່າປົກກະຕິເລື້ອຍໆ.*
- *ຜູ້ຄ້າມະນຸດມັກຈະຈ່າຍໜີ້ໃຫ້ແຮງງານເຄື່ອນຍ້າຍ, ຈ່າຍຄ່າເດີນທາງ ຫຼື ເອົາເງິນໃຫ້ຢືມເພື່ອຮັບປະກັນໃຫ້ແຮງງານເຄື່ອນຍ້າຍເຮັດວຽກຢູ່ນຳຕະຫຼອດ. ຜູ້ຄ້າມະນຸດຫວັງໃຫ້ຜູ້ທີ່ຖືກເຄາະຮ້າຍນັ້ນຕິດໜີ້ພວກເຂົາ.*
- *ຜູ້ຄ້າມະນຸດມັກຈະເກັບເອກະສານຂອງແຮງງານເຄື່ອນຍ້າຍໄວ້, ຕາມປົກກະຕິແລ້ວແມ່ນພວກເຂົາມັກຈະເກັບໜັງສືເດີນທາງຂອງແຮງງານເຄື່ອນຍ້າຍໄວ້(ປັດສະປໍ).*
- *ຜູ້ຄ້າມະນຸດມັກຈະຕົວະແຮງງານເຄື່ອນຍ້າຍໄປສະຖານທີ່ໂຮງງານ.*

**5. ບອກເຖິງສາເຫດທີ່ຢາເສບຕິດທຳຮ້າຍແກ່ຄົນ (ຈາກຕອນທີ 6)**

*ຄຳຕອບ*

- *ຢາເສບຕິດເປັນສາເຫດທຳຮ້າຍຮ່າງກາຍຂອງເຈົ້າໃນໄລຍະຍາວ - ພວກມັນທຳລາຍຫົວໃຈ, ປອດ, ຕັບ ແລະ ໄຂ່ຫຼັງຂອງເຈົ້າ.*
- *ຄົນເຮົາອາດເສບຢາເກີນຂະໜາດ, ໝາຍຄວາມວ່າເມື່ອຄົນເຮົາຫາກກິນຢາຫຼາຍເກີນໄປໂດຍການຫຼົງຜິດ ແລະ ອາດເສຍຊີວິດໄດ້ ດັ່ງທີ່ຮູ້ກັນທົ່ວໄປ.*

- ຄົນເຮົາອາດຕິດເອດສ ຫຼື ພະຍາດອື່ນໆຖ້າໃຊ້ເຂັມຊີດຢາຮ່ວມກັນ.
- ຢາເສບຕິດເຮັດໃຫ້ທ່ານຄິດໃນສິ່ງທີ່ສູງກວ່າປົກກະຕິ.

**6.ອັນໃດທີ່ເປັນ 4 ຫົວຂໍ້ຫຼັກເຊິ່ງນອນຢູ່ໃນສົນທິສັນຍາວ່າດ້ວຍສິດທິເດັກ?(ຈາກຕອນທີ10).**

ຄຳຕອບ:

- ສິດທິການມີຊີວິດຢູ່ຫຼອດ.
- ສິດທິການປົກປ້ອງ.
- ສິດທິການພັດທະນາ
- ສິດທິໃນການປະກອບສ່ວນ.

**7.ຍົກຕົວຢ່າງ: ການສື່ສານແບບສຸພາບ (ຈາກຕອນທີ 13)**

- ຄຳຕອບ : ຕົວຢ່າງໜຶ່ງວ່າ "ບໍ່ຂອບໃຈ, ຂ້າພະເຈົ້າມັກຢູ່ບ້ານບໍ່ມັກອອກໄປຫຼິ້ນ. ແຕ່ບັນດາຜູ້ເຂົ້າຮ່ວມອາດຄິດຫາຕົວຢ່າງອື່ນໆ. ຄວນຕັດສິນໃຈເອງ, ຖ້າສິ່ງນັ້ນເປັນສິ່ງທີ່ຖືກຕ້ອງ."

**8.ຍົກຕົວຢ່າງການສື່ສານແບບຖ່ອມຕົວ (ຈາກຕອນທີ 13).**

- ຄຳຕອບ: ຄືຕົວຢ່າງວ່າ: " ຕົກລົງ,ຂ້ອຍຈະປະຕິບັດຕາມສິ່ງທີ່ເຈົ້າເວົ້າຖ້າຫາກເຈົ້າຈະເປັນເພື່ອນກັບຂ້ອຍ" ແຕ່ວ່າບັນດາຜູ້ເຂົ້າຮ່ວມອາດຄິດຫາຕົວຢ່າງອື່ນໆ ແລະ ເຈົ້າຕ້ອງຕັດສິນໃຈຖ້າຫາກວ່າພວກເຂົາຫາກເຮັດຖືກຕ້ອງ.

**9.ຍົກຕົວຢ່າງການສື່ສານແບບແຂງກະດ້າງ (ຈາກຕອນທີ 13)**

ຄຳຕອບ: ຕົວຢ່າງ1 "ຢຸດ! ຢ່າເວົ້າ,ກູຊັງມຶງ!" ບັນດາຜູ້ເຂົ້າຮ່ວມອາດຄິດຫາຕົວຢ່າງອື່ນໆ ແລະ ເຈົ້າຕ້ອງຕັດສິນໃຈຖ້າຫາກວ່າພວກເຂົາຫາກເຮັດຖືກຕ້ອງ.

**10. ຈົ່ງບອກສິ່ງໜຶ່ງມາເມື່ອເຈົ້າມີການຟັງທີ່ດີ (ຈາກຕອນທີ 14)**

ຄຳຕອບ:

- ຄິດກ່ຽວກັບວ່າຜູ້ອື່ນກຳລັງເວົ້າຫຍັງ.
- ຖາມຄຳຖາມກ່ຽວກັບສິ່ງທີ່ທ່ານບໍ່ເຂົ້າໃຈ.
- ທວນຄືນຄຳເກົ່າອັນທີ່ຫາກໍ່ເວົ້າຜ່ານໄປ.
- ຄິດກ່ຽວກັບສິ່ງທີ່ທ່ານຢາກຮູ້ຕື່ມ ແລະ ຖາມຕາມລຳດັບ.

**11.ທ່ານສາມາດຍົກຕົວຢ່າງໄດ້ບໍ່ວ່າຮູບແບບການຄິດໃນທາງລົບແມ່ນແນວໃດ?**

**(ຈາກຕອນ15)**

ຄຳຕອບ

- ຄິດເກີນເລີຍຄວາມຈິງ.
- ຕຳນິຕົນເອງ



- ເບິ່ງແຕ່ໃນແງ່ທີ່ບໍ່ດີ
- ຄາດຄະເນໃນສິ່ງບໍ່ດີໃນຕໍ່ໜ້າ

**12.ທ່ານສາມາດຈຳໄດ້ບໍ 3 ບາດກ້າວທີ່ຮັບມືກັບອາລົມທີ່ບໍ່ດີ (ຈາກຕອນທີ 16)**

ຄຳຕອບ:

- ຄິດຄືນວ່າເຈົ້າມີຄວາມຮູ້ສຶກແນວໃດ?
- ທຳຄວາມຂົ້າໃຈວ່າເປັນຫັຍງທ່ານຄິດເຊັ່ນນັ້ນ.
- ເລືອກກະທຳສິ່ງໃດໜຶ່ງທີ່ເຮັດໃຫ້ທ່ານມີຄວາມຮູ້ສຶກດີແຕ່ບໍ່ທຳຮ້າຍຄົນອື່ນ.

**13.ທ່ານສາມາດອະທິບາຍໄດ້ບໍບາດກ້າວຕັດສິນໃຈ? (ຈາກຕອນທີ 18)**

ຄຳຕອບ :

- ບາດກ້າວທີ 1 ອະທິບາຍເຖິງຄຳຖາມທີ່ທ່ານໃຊ້ໃນການຕັດສິນໃຈ.
- ບາດກ້າວທີ 2 ຮຽນຮູ້ເພີ່ມຕື່ມ.
- ບາດກ້າວທີ 3 ຂຽນລາຍການທາງເລືອກຕ່າງໆ.
- ບາດກ້າວທີ 4 ປະເມີນຄວາມສ່ຽງ ແລະ ຜົນໄດ້ຮັບ.
- ບາດກ້າວທີ 5 ເລືອກສິ່ງທີ່ຈະຕັດສິນໃຈ.

**14.ຈົ່ງບອກມາ 2 ຢ່າງທີ່ທ່ານຄິດວ່າມີຄວາມປອດໄພໃນການເດີນທາງ (ຈາກຕອນທີ 22).**

ຄຳຕອບລວມມີ :

- ຕື່ມໃສ່ລາຍການໃສ່ຕາຕະລາງກ່ອນການເດີນທາງ.
- ພະຍາຍາມຫາເອກະສານທີ່ຖືກຕ້ອງຕາມກົດໝາຍເຊັ່ນ: ໜັງສືເດີນທາງ ຫຼື ວີຊາອະນຸຍາດເຮັດວຽກກ່ອນອອກເດີນທາງ.
- ຈົ່ງສຳເນົາເອກະສານເດີນທາງທັງໝົດໄວ້ນຳຄອບຄົວ (ກໍລະນີເຈົ້າມີບັນຫາ ຫຼື ເຮັດເສຍມັນຈະຊ່ວຍເຫຼືອເຈົ້າໄດ້).
- ຄວນຖືເງິນຈຳນວນໜຶ່ງໃຫ້ພຽງພໍກັບການໃຊ້ຈ່າຍໃນການເດີນທາງ,ໃນເວລາຊອກຫາວຽກ, ຫຼື ຈ້າງຄ່າລົດກັບບ້ານ.
- ຈົ່ງຮັກສາເອກະສານເດີນທາງ, ເງິນຂອງເຈົ້າໄວ້ໃຫ້ດີໃນເວລາເດີນທາງ.
- ຈົ່ງເດີນທາງໄປນຳກັນຫຼາຍຄົນ (ຖ້າໄປຫຼາຍຄົນພ້ອມກັນມັນກໍ່ເປັນການຍາກທີ່ນາຍໜ້າຈະມາຕົວຍົວະຄົນເປັນທຸ່ມໄດ້,ຖ້າເຮົາມີໝູ່ເພື່ອນກໍ່ຈະຂໍຄວາມຊ່ວຍເຫຼືອເຊິ່ງກັນ ແລະ ກັນໄດ້).
- ໃຫ້ລະວັງຄົນແປກໜ້າໃນລົດບັດ (ບາງເທື່ອເຂົາອາດແມ່ນຜູ້ຄ້າມະນຸດ)
- ຖ້າຄົນໃດໜຶ່ງມາຂໍເບິ່ງເອກະສານເດີນທາງຂອງເຈົ້າ, ໃຫ້ຂໍຄວາມຊ່ວຍເຫຼືອຈາກຄົນອື່ນໆຜູ້ທີ່ເດີນທາງໄປນຳ ຫຼື ເຈົ້າໜ້າທີ່ມາຊ່ວຍ.
- ຢ່າໄປເຊື່ອຄຳເວົ້າຂອງຄົນແປກໜ້າໃນຄິວລົດເມ.
- ໃຫ້ພະຍາຍາມຂີ່ລົດສາທາລະນະ,ຄວນຫຼີກລ້ຽງໄປຂື້ນລົດສ່ວນບຸກຄົນ ຫຼື ລົດບັດນ້ອຍ.

**15. ຄວາມແຕກຕ່າງລະຫ່ວາງວີຊ້າຂໍໄປເຮັດວຽກ ແລະ ວີຊ້າທ່ອງທ່ຽວຕ່າງກັນແນວໃດ?**

**(ຈາກຕອນທີ 22)**

- *ຂໍວີຊ້າໄປເຮັດວຽກແມ່ນການຂໍໄປເຮັດວຽກທີ່ປະເທດອື່ນໆທີ່ຖືກຕ້ອງຕາມກົດໝາຍ.*
- *ວີຊ້າທ່ອງທ່ຽວແມ່ນເພື່ອໄປທ່ອງທ່ຽວບໍ່ແມ່ນເພື່ອໄປເຮັດວຽກ.*

**16. ໜັງສືເດີນທາງແມ່ນຫັຍງ? (ຈາກຕອນ 11 ແລະ 22)**

- *ແມ່ນໜັງສືເດີນທາງທີ່ອອກໃຫ້ໂດຍລັດຖະບານອະນຸຍາດໃຫ້ທ່ານເຂົ້າ ແລະ ອອກ ປະເທດຂອງຕົນເອງ.*

**17.ວີຊາແມ່ນຫັຍງ? (ຈາກຕອນທີ 11 ແລະ 22)**

- *ວີຊ້າແມ່ນກາຈ້ຳ ຫຼື ສະຕິກເກີໃນໜັງສືເດີນທາງຂອງທ່ານທີ່ອະນຸຍາດໃຫ້ທ່ານເຂົ້າປະເທດນັ້ນໆ.*

**18.ເບີໂທຕິດຕໍ່ສຸກເສີນພາຍໃນປະເທດຂອງເຈົ້າແມ່ນເບີໃດ? (ຈາກຕອນທີ 24)**

- *ຄຳຕອບນີ້ແມ່ນຢູ່ເອກະສານ IS : ເບີໂທຕິດຕໍ່ສຸກເສີນ, ແຕ່ບັນດາຄູຝຶກຄວນຈື່ເບີໂທເຫຼົ່ານັ້ນ.*

**19.ເບີໂທຕິດຕໍ່ສຸກເສີນຂອງປະເທດປາຍທາງທີ່ຢູ່ໃກ້ກັບປະເທດຂອງເຈົ້າແມ່ນເບີໃດ? ທີ່ໃກ້ກັບປະເທດພວກເຮົາ (ຈາກຕອນທີ24)**

- *ຄຳຕອບ ນີ້ແມ່ນຢູ່ເອກະສານ IS ເບີໂທຕິດຕໍ່ສຸກເສີນ, ແຕ່ບັນດາຄູຝຶກຄວນຈື່ເບີໂທເຫຼົ່ານັ້ນ.*



# ກິດຈະກຳອົບອຸ່ນຮ່າງກາຍ 6: ເກມຜ້າແພ

**ຈຸດປະສົງ:** **ໃຫ້ຜູ້ເຂົ້າຮ່ວມມີຄວາມມ່ວນຊື່ນ ແລະ ອົບອຸ່ນຮ່າງກາຍ**

**ເວລາ:**

5 – 10 ນາທີ

**ອຸປະກອນ**

ຜ້າແພ

1. ອະທິບາຍເກມຕໍ່ໄປນີ້ແມ່ນເກມແບບໃໝ່ຂອງເກມກ່ຽວກັບວັດທະນາທຳເຊິ່ງໃຫ້ພວກເຮົາຮູ້ຈັກເຊິ່ງກັນ ແລະ ກັນດີຂຶ້ນ.

2.ໃຫ້ກຸ່ມນັ່ງອ້ອມເປັນວົງມົນ.

3.ໃຫ້ສຳມະນາກອນຄົນໜຶ່ງຍ່າງອ້ອມວົງມົນ ແລະ ວາງຜ້າແພໃສ່ຫຼັງເດັກຄົນໜຶ່ງ

(ເກມນີ້ສາມາດຫຼິ້ນໂດຍການສຳພັດບ່າໄລ່ແທນທີ່ໃຊ້ຜ້າແພ)

4.ຜູ້ທີ່ຄິດວ່າແພໄດ້ຖືກມາວາງທາງຫຼັງກໍ່ໄດ້ໄລ່ຜູ້ທີ່ວາງອ້ອມວົງມົນ.

5.ຖ້າຜູ້ໄລ່ຫາກໄລ່ທັນ, ຜູ້ນັ້ນກໍ່ໄປອີກຮອບໜຶ່ງ.

6.ຖ້າໄລ່ບໍ່ທັນຜູ້ນັ້ນກໍ່ເປັນຕໍ່.

1

# ບົດທີ 1:
# ການແນະນຳສະໂມສອນເດັກຂອງພວກເຮົາ

**ຈຸດປະສົງ:** **ໃຫ້ບັນດາຜູ້ເຂົ້າຮ່ວມຮູ້ຈັກເຊິ່ງກັນ ແລະ ກັນ, ເພື່ອຮຽນຮູ້ຕື່ມກ່ຽວກັບ ແລະ ຊ່ວຍກັນຂຽນລະບຽບຂອງ**

## ເວລາ:

75 ນາທີ

### ອຸປະກອນ

ສໍສີ 10 ຊຸດ,
ປ້າຍຊື່ຂອງແຕ່ລະຄົນ
ເຈ້ຍແຜ່ນໃຫຍ່
ສຳເນົາເອກະສານອ້າງອີງ 1,
ບົດທົດສອບໃຫ້ທຸກຄົນ.

## ການກະກຽມ

ກ່ອນການເລີ່ມ ແລະ ເຄື່ອງມືທີ່ໃຊ້ໃນການເດີນທາງທີ່ປອດໄພ. ປະສານງານກັບພະນັກງານອົງການສຸພະນິມິດເພື່ອຕັດສິນໃຈວ່າລາງວັນທີ 1,2,3 ສຳລັບກຸ່ມແມ່ນຫຍັງ?

ກ່ອນທ່ານເລີ່ມຕົ້ນ. ດຳເນີນກອງປະຊຸມກັບຄູຝຶກຜູ້ໃຫຍ່ ແລະ ເດັກ, ພໍ່ແມ່, ເດັກຜູ້ເຂົ້າຮ່ວມ ແລະ ອຳນາດການປົກຄອງບ້ານ.

- ສ້າງຕາຕະລາງເວລາ
- ເຊັນໃບຍິນຍອມ
- ສົນທະນາເນື້ອໃນບົດຮຽນ

ທ່ານຄວນເຮັດສິ່ງຕໍ່ໄປນີ້ເຊັ່ນດຽວກັນ:

- ອ່ານບົດຮຽນຄືນກ່ອນທີ່ຈະເລີ່ມຕົ້ນ.
- ກະກຽມອຸປະກອນ

ມາກ່ອນເວລາເພື່ອກະກຽມສະຖານທີ່ກ່ອນເລີ່ມຕົ້ນ.

## ການແນະນຳ

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມດ້ວຍການເອີ້ນຊື່ຜູ້ເຂົ້າຮ່ວມພ້ອມທັງຍື່ນໃບລົງທະບຽນໃຫ້ພວກເຂົາເຊັນ.

**ອົບອຸ່ນຮ່າງກາຍ:**

ໃຫ້ຄູຝຶກເດັກນຳພາຫຼີ້ນເກມໝາກບານທີ່ມີຢູ່ໃນລາຍການເພື່ອອົບອຸ່ນຮ່າງກາຍ.

**ທວນຄືນ:**

ບໍ່ມີ



### ການເຄື່ອນຍ້າຍທີ່ປອດໄພສຳລັບສະໂມສອນເດັກ

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມ, ແລະ ໃຫ້ຜູ້ເຂົ້າຮ່ວມແນະນຳຕົວເອງ.ບອກຜູ້ເຂົ້າຮ່ວມວ່າ: ທຸກຄົນຈະໄດ້ຮູ້ຈັກກັນ, ການເຄື່ອນຍ້າຍທີ່ປອດໄພສຳລັບສະໂມສອນເດັກ, ໃຫ້ຜູ້ເຂົ້າຮ່ວມຄິດກ່ຽວກັບບ້ານຂອງພວກເຂົາ.

ເຕືອນຄວາມຈຳບັນດາຜູ້ເຂົ້າຮ່ວມກ່ຽວກັບຕາຕະລາງ ເຊິ່ງໄດ້ຕັດສິນໃຈໃນກອງປະຊຸມແລ້ວນັ້ນ, ເຊິ່ງວ່າຈັກຄັ້ງທີ່ຈະດຳເນີນສະໂມສອນເດັກ, ເວລາໃດ ແລະ ຄູຝຶກຄົນໃດທີ່ຈະມາສອນ. ອະທິບາຍກວມເອົາຫຼັກສູດທັງໝົດຂອງຫົວຂໍ້ແຕ່ລະປີແຕກຕ່າງກັນທີ່ຕ້ອງໄດ້ນຳມາສົນທະນາ.ເຊິ່ງເລີ່ມຕົ້ນດ້ວຍຫົວຂໍ້ (ການຄ້າມະນຸດ, ການຮຽນຮູ້ວ່າ: ມັນແມ່ນຫຍັງ? ເກີດຂຶ້ນແນວໃດ? ແລະ ເກີດຢູ່ໃສ? ແລະ ແລ້ວຜູ້ເຂົ້າຮ່ວມຕ້ອງຮຽນຮູ້ກ່ຽວກັບການພັດທະນາທັກສະຕົນເອງ. ມີທັກສະຈາກສັງຄົມຫຼາຍຢ່າງທີ່ໃຫ້ຄົນຮຽນຮູ້ ແລະ ຮັກສາຕົນເອງໃຫ້ມີຄວາມປອດໄພ.

ອະທິບາຍວ່າ:ເຊິ່ງຄູຝຶກຍັງຕ້ອງສົນທະນາໃນຫົວຂໍ້ທີ່ຮັກສາຄວາມປອດໄພກ່ອນການເດີນທາງ, ກ່ອນການເຄື່ອນຍ້າຍແຮງງານ, ແລະ ບ່ອນຈຸດໝາຍປາຍທາງ.ຈະຕ້ອງໄດ້ໃຊ້ໝົດປີເພື່ອກວມເອົາຫົວຂໍ້ດັ່ງກ່າວ.

### ຄຳໝັ້ນສັນຍາ

ຈົ່ງອະທິບາຍວ່າເຄື່ອງມືທີ່ນຳໃຊ້ໃນການເຄື່ອນຍ້າຍແຮງງານທີ່ປອດໄພຂອງສະໂມສອນເດັກ ບໍ່ແມ່ນການຮຽນຄືຢູ່ໃນໂຮງຮຽນ.ໃນທຸກຂັ້ນຕອນບົດຮຽນຕ້ອງມີເກມຢູ່ນຳ,ມີເວລາໃນການແຕ້ມຮູບ, ແລະ ບັນດາຜູ້ເຂົ້າຮ່ວມຕ້ອງສະແດງບົດບາດສົມມຸດ. ນີ້ແມ່ນການອອກແບບເພື່ອໃຫ້ມີຄວາມມ່ວນຊື່ນ, ສ້າງສາຍສຳພັນ ແລະ ກໍ່ເພື່ອເພີ່ມການສອນໃຫ້ຫຼາຍຂຶ້ນ.

ມັນເປັນສິ່ງທີ່ສຳຄັນຫຼາຍຖ້າຫາກຜູ້ເຂົ້າຮ່ວມມາຮ່ວມຕະຫຼອດຈົນຈົບຫຼັກສູດ, ເພື່ອໃຫ້ຮຽນຮູ້ກ່ຽວກັບຂໍ້ມູນຂ່າວສານ ແລະ ທັກສະຊີວິດຕ່າງໆທີ່ສຳຄັນ.

ອະທິບາຍເພື່ອສ້າງຄວາມມຸ້ງໝັ້ນ ແລະ ສົ່ງເສີມໃຫ້ມາຮ່ວມໂດຍການໃຊ້ລະບົບສະສົມດາວ. ມີ 30 ຂັ້ນຕອນທີ່ລວມຢູ່ໃນເຄື່ອງມືດັ່ງກ່າວ,ເຄື່ອງມືດັ່ງກ່າວເພື່ອສົ່ງເສີມກິດຈະກຳທີ່ເປັນກະບອກສຽງ. ບັນດາຜູ້ເຂົ້າຮ່ວມຕ້ອງໄດ້ຮັບດາວໃນແຕ່ລະຕອນຂອງບົດຮຽນ. ຜູ້ໃດຫາກໄດ້ຮັບ 22 ດາວແມ່ນໄດ້ຮັບລາງວັນຂັ້ນທີ 3, ຖ້າໄດ້ຮັບ 26 ດາວແມ່ນໄດ້ລາງວັນທີ2, ຜູ້ໃດຫາກມາຮ່ວມຕະຫຼອດ 30 ຕອນຂອງບົດຮຽນແມ່ນໄດ້ຮັບລາງວັນທີ 1, ຄູຝຶກກໍ່ມີສິດໄດ້ຮັບດາວເຊັ່ນດຽວກັນ.

ອະທິບາຍຕໍ່ຜູ້ເຂົ້າຮ່ວມວ່າລາງວັນທີ 1, 2, 3 ແມ່ນເພື່ອກຸ່ມຂອງພວກເຈົ້າ, ລາງວັນດັ່ງກ່າວກໍ່ຈະປ່ຽນແປງໃນແຕ່ລະບ້ານ.

### ປ້າຍຊື່

ຢາຍປ້າຍຊື່ ແລະ ບົກຂຽນໃຫ້ຜູ້ເຂົ້າຮ່ວມຂຽນຊື່ຕົນເອງ ແລະ ແຕ້ມພາບນ້ອຍໆເຊິ່ງສະແດງເຖິງບາງສ່ວນທີ່ພວກເຂົາມັກ.

### ການມີສ່ວນຮ່ວມຂອງເດັກນ້ອຍ.

ອະທິບາຍໃຫ້ແກ່ພວກເຂົາວ່າຄຸນນະທຳອັນໜຶ່ງຂອງອົງການສຸພະນິມິດ ແລະ SNCC ແມ່ນເດັກມີສິດທີ່ຈະຮັບຟັງ, ມີສິດທິໃນການສະແດງຄວາມຄິດໃນສິ່ງທີ່ກະທົບຕໍ່ພວກເຂົາ, ສິດທິໃນການມີອິດສະຫຼະພາບສະແດງຄວາມຄິດ.

ອະທິບາຍນີ້ກໍ່ໝາຍຄວາມວ່າເດັກໃນສະໂມສອນມີສິດໃນການສື່ສານຄວາມຄິດເຫັນ, ແລະ ມີສ່ວນຮ່ວມໃນການຕັດສິນໃຈຕ່າງໆຂອງສະໂມສອນ. ນີ້ກໍ່ແມ່ນເຫດຜົນອີກອັນໜຶ່ງວ່າ: ເປັນຫຍັງຈຶ່ງມີການປະຊຸມກ່ອນເລີ່ມລົງມືການຝຶກອົບຮົມ, ເພື່ອຟັງຄວາມຄິດເຫັນຂອງເດັກຈາກເນື້ອໃນບົດຮຽນ,ຕາຕະລາງເວລາຂອງສະໂມສອນ. ອະທິບາຍວ່າອົງການສຸພະນິມິດຈະຮັບຟັງ

***ບົດຂໍ້ມູນ, ຄູ່ມືແນະນຳຂອງການມີສ່ວນຮ່ວມຂອງເດັກຂອງອົງການສຸພະນິມິດ ຕຸລາ 2012.***

ຄວາມຄິດເຫັນຂອງຄູຝຶກຕະຫຼອດບົດຮຽນຂອງສະໂມສອນເດັກ ແລະ ຈະໄດ້ຈັດກອງປະຊຸມເພື່ອແລກປ່ຽນຄວາມຄິດເຫັນເລົ່ານັ້ນໃນຕອນທ້າຍຂອງການຝຶກອົບຮົມຄັ້ງນີ້.

ອະທິບາຍວ່າເຄື່ອງມືທີ່ໃຊ້ໃນການເຄື່ອນຍ້າຍແຮງງານທີ່ປອດໄພຈະສະໜອງການເຂົ້າເຖິງຂໍ້ມູນ ເຊິ່ງເຮັດໃຫ້ຜູ້ເຂົ້າຮ່ວມມີຄວາມຄິດໃນການຕັດສິນໃຈກ່ຽວກັບຊີວິດຂອງຕົນເອງ. ໃນລະຫວ່າງບົດຮຽນອົງການສຸພະນິມິດຫວັງວ່າ ບັນດາຜູ້ເຂົ້າຮ່ວມທັງໝົດຈະນຳໃຊ້ຂໍ້ມູນເຫຼົ່ານີ້ນັ້ນການແບ່ງປັນຄວາມຄິດເຫັນນຳກັນ, ມາຮ່ວມທຸກໆກິດຈະກຳສະໂມສອນເດັກ ແລະ ເຂົ້າຮ່ວມເປັນປະຈຳ.

## ຈົ່ງຊ່ວຍກັນຂຽນລະບຽບຂອງສະໂມສອນເດັກ.

ຫຼັກສູດສະບັບນີ້ ແມ່ນການອອກແບບເພື່ອໃຫ້ມີຄວາມມ່ວນຊື່ນ, ແຕ່ກໍ່ເປັນບ່ອນທີ່ຜູ້ເຂົ້າຮ່ວມເຄົາລົບເຊິ່ງກັນ ແລະ ກັນ ແລະ ນັບຖືຮັກແພງກັນ. ລະບຽບຕ່າງໆສາມາດໃຫ້ບັນດາຜູ້ເຂົ້າຮ່ວມເຮັດວຽກນຳກັນໄດ້. ຕົວຢ່າງລະບຽບດັ່ງກ່າວຄວນເປັນ: *"ພວກເຮົາຟັງເມື່ອມີສະມາຊິກຄົນໜຶ່ງເວົ້າ, ແລະ ພະຍາຍາມບໍ່ໃຫ້ລົບກວນກັນ."*

ໃຫ້ສະມາຊິກກຸ່ມຄິດກ່ຽວກັບລະບຽບພື້ນຖານຂອງກຸ່ມ, ຈົ່ງຂຽນລະບຽບດັ່ງກ່າວໃສ່ໃນກະດານ.
ຖ້າລະບຽບດັ່ງກ່າວຍັງບໍ່ທັນໄດ້ຂຽນໃຫ້ຕື່ມສິ່ງດັ່ງກ່າວໃສ່:

- ສິ່ງທີ່ພວກເຮົາເວົ້ານີ້ແມ່ນເປັນສ່ວນຕົວ ແລະ ເວົ້າກັນພາຍໃນກຸ່ມເທົ່ານັ້ນ. ພວກເຮົາຈະບໍ່ບອກຄົນອື່ນໆ. ສິ່ງທີ່ເພື່ອນຂອງພວກເຮົາໄດ້ເວົ້າອອກມາ ຫຼື ກະທຳໃນກຸ່ມ.
- ທຸກຄົນມີສິດເລືອກໃນສິ່ງທີ່ຖືກຕ້ອງ, ບໍ່ແມ່ນມີແຕ່ເວົ້າ, ຫຼື ບໍ່ເຂົ້າຮ່ວມກໍ່ໄດ້ຖ້າພວກເຂົາມີຄວາມຮູ້ສຶກບໍ່ສະດວກທີ່ຈະເຂົ້າຮ່ວມ.
- ທຸກໆທີ່ມາຮ່ວມມີໂອກາດໃນການເວົ້າອອກມາ.
- ເມື່ອຄົນໃດໜຶ່ງຫາກເວົ້າບົດຮຽນຄົນອື່ນໆກໍ່ຕ້ອງຟັງ.
- ບໍ່ຄວນໃຫ້ມີການຕີກັນ ຫຼື ທຳຮ້າຍຄວາມຮູ້ສຶກຄົນອື່ນ.
- ຖ້າສຽງໂທລະສັບດັງກໍ່ຢ່າຮັບສາຍໃນເວລາດຳເນີນບົດຮຽນ, ຈົ່ງກວ່າວ່າເບີນັ້ນແມ່ນສຸກເສີນ.
- ພວກເຮົາພະຍາຍາມທຳໃຫ້ດີທີ່ສຸດ ເພື່ອເຮັດໃຫ້ກຸ່ມໄວໜຸ່ມມາເຂົ້າຮ່ວມໃນທຸກໆຕອນຂອງບົດຮຽນ.

ໃຫ້ສະມາຊິກກຸ່ມພິຈາລະນາແຕ່ລະຄົນ. ມັນຈຳເປັນບໍ? ມັນເຂົ້າທ່າບໍ? ມັນຍຸດຕິທຳບໍ?

ໃຫ້ກຸ່ມອ່ານຄືນໝົດລາຍການ ແລະ ລົງຄະແນນວ່າລະບຽບໃດຄວນຮັກສາໄວ້.



ຂຽນລາຍການດັ່ງກ່າວໃສ່ເຈ້ຍແຜ່ນໃຫຍ່ ແລະ ຕິດໃສ່ຝາ. ໃຫ້ບັນດາຜູ້ເຂົ້າຮ່ວມເຊັນຊື່ ຫຼື ແຕ້ມຮູບທີ່ສະແດງເຖິງພວກເຂົາໃສ່ລະບຽບ,ເຊັ່ນດຽວກັບເຊັນຄຳໝັ້ນສັນຍາໃນສະໂມສອນ. ບັນດາຄູຝຶກຄວນເຊັນລະບຽບເຊັ່ນກັນ ແລະ ສັນຍາຢູ່ກັບເຂົາ.

ຕິດລະບຽບໃສ່ຝາກ່ອນການເລີ່ມ

ຂໍອະທິບາຍວ່າຄົນໃດຄົນໜຶ່ງຫາກຝ່າຝືນລະບຽບດັ່ງກ່າວ, ຖ້າຄົນໃດໃນກຸ່ມເຮັດເຊັ່ນນັ້ນ, ພວກເຂົາຊີ້ໃສ່ລະບຽບ, ເຕືອນກຸ່ມໂດຍຄຳສຸພາບ.

ຂໍອະທິບາຍວ່າບາງວັດທະນາທຳຈະຕ້ອງລົງໂທດກັບຜູ້ຜ່າຝືນລະບຽບຢ່າງເໝາະສົມຕົວຢ່າງ.
ທ່ານຄວນໃຫ້ກຸ່ມຮ້ອງເພງແບບຕະຫຼົກ, ຫຼື ເຕັ້ນໃຫ້ໝູ່ເບິ່ງ, ຖ້າໃຜຝ່າຝືນລະບຽບເຖິງຢ່າງໃດກໍ່ຢ່າເຮັດແນວນີ້ຖ້າເດັກຄິດ.ມັນເປັນສິ່ງທີ່ມ່ວນຊື່ນ.ບໍ່ຕ້ອງເຮັດໃຫ້ເດັກຄົນອື່ນອາຍ. ລວມທັງສະມາຊິກກຸ່ມ, ເຊິ່ງວ່າລະບຽບດັ່ງກ່າວບໍ່ແມ່ນການລົງໂທດຄົນອື່ນ. ລະບຽບດັ່ງກ່າວຈະສັກສິດກໍ່ຕໍ່ເມື່ອທຸກຄົນມີຄວາມສາມັກຄີ ແລະ ປະຕິບັດຕາມ. ພວກເຂົາຄວນສ້າງສະພາບແວດລ້ອມທີ່ດີໃນສະໂມສອນ.

ຍັງມີສິ່ງໜຶ່ງທີ່ຈະຕ້ອງໄດ້ປຶກສາຫາລື. ໃນລະຫວ່າງການດຳເນີນເຄື່ອງມືດັ່ງກ່າວ, ຫົວຂໍ້ທີ່ຫຍຸ້ງຍາກຈະຕ້ອງໄດ້ນຳມາລົມກັນ, ເຊັ່ນວ່າຜູ້ໃຫຍ່ກໍ່ອາດເຮັດໃຫ້ເດັກນ້ອຍບາດເຈັບໄດ້. ອົງການສຸພະນິມິດເຊື່ອສະເໜີວ່າ: ເດັກມີສິດໃນການດຳລົງຊີວິດ, ປັດສະຈາກຄວາມຮຸນແຮງ ແລະການຂູດຮີດ. ຖ້າຜູ້ໃຫຍ່ຫາກຕີເດັກນ້ອຍກໍ່ໃຫ້ລາຍງານຜູ້ຮັບຜິດຊອບສະໂມສອນກ່ຽວກັບເລື່ອງດັ່ງກ່າວ. ຜູ້ຮັບຊອບສະໂມສອນຈະຕ້ອງຕິດຕໍ່ກັບອົງການສຸພະນິມິດເພື່ອດຳເນີນຄະດີ ແລະ ປົກປ້ອງເດັກນ້ອຍ.

## ປິດບົດຮຽນ.

ໃນຕອນທ້າຍຂອງການດຳເນີນສະໂມສອນເດັກ, ມັນຈະເປັນຜົນດີທີ່ຜູ້ເຂົ້າຮ່ວມໄດ້ມີໂອກາດຖາມ ແລະ ສ່ອງແສງກັບຄູຝຶກ. ສາມາດລວບລວມເອົາສິ່ງທີ່ປິດບັງ ແລະ ສະເໜີແນວຄວາມຄິດໃຫ້ຄູຝຶກໃນຫົວຂໍ້ທີ່ຕ້ອງການອະທິບາຍເພີ່ມ ຫຼື ແກ້ໄຂ. ຄູຝຶກສາມາດຕອບສະໜອງຄຳຕອບໃນບົດຮຽນຄັ້ງຕໍ່ໄປ ຫຼື ວາງແຜນໃນເວລາຕໍ່ມາ.

ຂອບໃຈນຳທຸກໆຄົນທີ່ເຂົ້າຮ່ວມ,ນັດເວລາພົບກັນໃນອາທິດໜ້າ: ຕົວຢ່າງ:ມີໃຜສາມາດບອກແດ່ບໍ່ວ່າເມື່ອໃດພວກເຮົາຄວນມາພົບກັນອີກມື້ໃດ? ເວລາ 3 ໂມງຂອງວັນຄານ? ໝົດທຸກຄົນຈະມາຢູ່ນີ້ໝົດບໍ? ເຈົ້າ ! ທຸກຄົນຜູ້ທີ່ມາຮ່ວມໃນມື້ນີ້ວ່າໄດ້ຮັບດາວຄົນລະ 1 ດາວ.

# ເອກະສານອ້າງອີງ 1:
# ບົດທົດສອບກ່ອນການຝຶກອົບຮົມ

**ຊື່:**..............................................................................................................................

**ວັນທີ:**...........................................................................................................................

**ສະໄນສອນຂອງບ້ານ:**...........................................................................................................

**ຄຳຖາມ:**

1.ການຄ້າມະນຸດໝາຍຄວາມວ່າແນວໃດ?

2.ຄວາມແຕກຕ່າງລະຫວ່າງການຄ້າມະນຸດ ແລະ ການລັກລອບເຂົ້າເມືອງແມ່ນແນວໃດ?

3.ການຄ້າມະນຸດສາມາດເກີດຂຶ້ນບ່ອນໃດແດ່?

4.ເລ່ກົນຂອງຜູ້ຄ້າມະນຸດສ່ວນຫຼາຍແມ່ນມີລັກສະນະໃດແດ່?

5.ເຈົ້າສາມາດອະທິບາຍໄດ້ບໍທັກສະການເວົ້າທີ່ດີແມ່ນແນວໃດ?

6.ເຈົ້າສາມາດອະທິບາຍໄດ້ບໍທັກສະການຟັງທີ່ດີແມ່ນແນວໃດ?

7.ເຈົ້າສາມາດອະທິບາຍໄດ້ບໍວິທີການຕັດສິນໃຈຂອງເຈົ້າ?

8.ເຈົ້າສາມາດອະທິບາຍໄດ້ບໍຜົນຮ້າຍຂອງຢາເສບຕິດມີຫຍັງແດ່?

9.ຈົ່ງຂຽນສອງຢ່າງທີ່ເຮັດໃຫ້ເຈົ້າມີຄວາມປອດໄພເມື່ອມີການເຄື່ອນຍ້າຍແຮງງານ?



10. ເບີໂທຕິດຕໍ່ສຸກເສີນແມ່ນເບີໃດ ໃນກໍລະນີເຈົ້າຕົກຢູ່ໃນອັນຕະລາຍ ຫຼື ຖືກຄ້າມະນຸດ?

11.ເບີໂທຕິດຕໍ່ສຸກເສີນທີ່ປະເທດປາຍທາງແມ່ນເບີໃດໃນກໍລະນີເຈົ້າຕົກຢູ່ໃນອັນຕະລາຍ ຫຼື ຖືກຄ້າມະນຸດ?

12.ໜັງສືເດີນທາງແມ່ນຫຍັງ?

13.ວີຊາແມ່ນຫຍັງ?

14. ຄວາມແຕກຕ່າງລະຫວ່າງ ວີຊ້າເຮັດວຽກ ແລະ ວີຊ້າທ່ອງທ່ຽວແມ່ນແນວໃດ?

15. ຖ້າເຈົ້າມີຈຸດປະສົງຢາກເຄື່ອນຍ້າຍແຮງງານ, ມີຂັ້ນຕອນອັນໃດແດ່ທີ່ຈະເຮັດໃຫ້ເຈົ້າມີການເຄື່ອນຍ້າຍແຮງງານຢ່າງປອດໄພ?

16. ເຈົ້າເຄີຍເຮັດກິດຈະກຳຫຍັງແດ່ທີ່ເປັນການຊ່ວຍເຫຼືອໄວໜຸ່ມໃນຊຸມຊົນຂອງເຈົ້າ, ຈົ່ງອະທິບາຍກິດຈະກຳນັ້ນ?

# 2

# ບົດທີ 2:
# ການຄິດກ່ຽວກັບຊີວິດຂອງພວກເຮົາ

**ຈຸດປະສົງ: ໃຫ້ບັນດາຜູ້ເຂົ້າຮ່ວມມີສະຕິຕື່ນຕົວ ແລະ ໃຊ້ບາດກ້າວທຳອິດຄິດວ່າກ່ຽວກັບອະນາຄົດຕົນເອງ**

### ເວລາ:

75 ນາທີ

### ການກະກຽມ

ຕິດລະບຽບຈາກອາທິດກ່ອນ

### ອຸປະກອນ

- ❖ ສ້າງເຈ້ຍຍາວໆໃຫ້ພໍກັນກັບຜູ້ເຂົ້າຮ່ວມ (ເອົາເຈ້ຍເອ4ມາຕິດກັນ)
- ❖ ຢາຍປຶ້ມບັນທຶກຄົນລະຫົວ(ຕ້ອງເປັນປຶ້ມຕາກະໂລ)
- ❖ ເກັບທີ່ສາມາດລັອກໄດ້ ເພື່ອຮັກສາບັນທຶກລາຍວັນ.ສ
- ❖ ບິກຊຽນ 10 ຊຸດ.

## ການແນະນຳ:

**ຍິນດີຕ້ອນຮັບ:**

ຍິນດີຕ້ອນຮັບຜູ້ເຂົ້າຮ່ວມໂດຍເອີ້ນຊື່ຜູ້ເຂົ້າຮ່ວມ.ຍື່ນໃບລົງທະບຽນໃຫ້ຜູ້ເຂົ້າຮ່ວມເຊັນ.

**ອົບອຸ່ນຮ່າງກາຍ:**

ຄູຝຶກນຳໃຊ້ເກມທີ່ມີຢູ່ໃນລາຍການ.

**ທົບທວນຄືນ:**

ມີໃຜແດ່ຈຳໄດ້ວ່າລະບຽບອາທິດທີ່ຜ່ານມາວ່າມີຫຍັງແດ່? ມີໃຜແດ່ອະທິບາຍໄດ້ລະບົບການສະສົມດາວ.

### ແມ່ນ້ຳແຫ່ງຊີວິດ

ຢາຍເຈ້ຍແຜ່ນຍາວໆພ້ອມດ້ວຍສໍສີ. ອະທິບາຍໃຫ້ພວກເຂົາແຕ້ມແມ່ນ້ຳ ຫຼື ເສັ້ນທາງແຫ່ງຊີວິດ ແລະ ໃຫ້ສະທ້ອນເຖິງຊີວິດຂອງພວກເຂົາ ແລະ ພວກເຂົາຕ້ອງການຢາກໃຫ້ຊີວິດຂອງພວກເຂົາເປັນແນວໃດ. ອະທິບາຍການວາດພາບງາມ ຫຼື ບໍ່ງາມບໍ່ເປັນຫຍັງ ເພາະວ່າຈຸດປະສົງກໍ່ເພື່ອສຸມໃສ່ແນວຄວາມຄິດ ແລະ ບົ່ງບອກເລື່ອງລາວກ່ຽວກັບຊີວິດຂອງພວກເຂົາ.

ອະທິບາຍເບື້ອງຕົ້ນ, ພວກເຂົາຄວນແຕ້ມຮູບພາບເຂົາເອງເຊັ່ນແຕ່ຍັງນ້ອຍເຊິ່ງລວມມີ:

- ຄອບຄົວຂອງເຈົ້າ.



- ບ້ານຂອງເຈົ້າ.
- ສິ່ງທີ່ເຈົ້າມັກເຮັດໃນເວລາເຈົ້າຍັງນ້ອຍ
- ຄິດເຖິງເຫດການຕ່າງໆເມື່ອເວລາເຈົ້າຍັງນ້ອຍ, ດີ ຫຼື ບໍ່ດີ ເຊິ່ງເຈົ້າຄິດວ່າມັນເປັນເລື່ອງທີ່ສຳຄັນ.

ບອກບັນດາຜູ້ເຂົ້າຮ່ວມວາດພາບຂອງພວກເຂົາໃນປະຈຸບັນ, ຊີວິດຕອນກາງເຊິ່ງລວມມີ :

- ເພື່ອນຂອງເຈົ້າ
- ສິ່ງທີ່ເຈົ້າມັກເຮັດ
- ສິ່ງທີ່ເຈົ້າຄິດວ່າເຈົ້າເຮັດໄດ້ດີ
- ສິ່ງເຈົ້າຢາກປ່ຽນແປງກ່ຽວກັບຊີວິດຂອງເຈົ້າ
- ເລື່ອງລາວອື່ນໆກ່ຽວກັບຊີວິດ, ສິ່ງດີ ຫຼື ບໍ່ດີ ທີ່ກະທົບຕໍ່ເຈົ້າ.

ໃຫ້ຜູ້ເຂົ້າຮ່ວມທັງໝົດຂຽນໃສ່ຕອນທ້າຍຂອງເຈ້ຍ ແລະ ຄວາມຫວັງຂອງພວກເຂົາໃນອະນາຄົດສິ່ງດັ່ງກ່າວລວມມີ:

- ຄວາມສຳພັນຂອງເຈົ້າ.
- ວຽກງານຂອງເຈົ້າ.
- ສິ່ງທີ່ເຈົ້າເຮັດ ແລະ ມີຄວາມມ່ວນຊື່ນ.

ໃຫ້ຜູ້ເຂົ້າຮ່ວມທັງໝົດຂຽນຂັ້ນຕອນຕ່າງໆທີ່ຈະກ້າວໄປເຖິງອະນາຄົດທີ່ເຂົາຕ້ອງການໃສ່ລຸ່ມພາບ.

ໃຫ້ຜູ້ເຂົ້າຮ່ວມທັງໝົດອະທິບາຍສາຍນ້ຳແຫ່ງຊີວິດຂອງຕົນ. ຢ່າໃຫ້ບັງຄັບກັນ, ໃຫ້ຜູ້ເຂົ້າຮ່ວມອາສາເວົ້າເອງ.

## ການສົນທະນາ

ແບ່ງກຸ່ມອອກເປັນ 6-8 ຄົນ. ໃຫ້ທຸກຄົນນັ່ງເປັນກຸ່ມໆ.ຖ້າຫາກແມ່ນຄູຝຶກເດັກໃຫ້ພວກເຂົາຊ່ວຍໃນການສົນທະນາ. ໃຫ້ກຸ່ມພິຈາລະນາປະຕິບັດຕາມຄຳຖາມນຳກັນ.

ເຕືອນໃຫ້ກຸ່ມໃຫ້ທຸກຄົນມີໂອກາດໄດ້ເວົ້າ ແລະ ມີສິດທີ່ຈະບໍ່ຕອບ.

- ຄິດບໍ່ວ່າໝົດທຸກຄົນມີເປົ້າໝາຍໃນຊີວິດ ຫຼື ໝົດທຸກຄົນຄິດລ່ອງລອຍ ຫຼື ປະຄວາມຫວັງລ່ອງລອຍໄປນຳນ້ຳໂດຍບໍ່ມີແຜນ?
- ເປັນຫັຍງຄົນເຮົາບາງຄັ້ງຈຶ່ງປະສົບຜົນສຳເລັດ ແລະ ບາງຄັ້ງບໍ່ປະສົບຜົນສຳເລັດ?
- ເຈົ້າຄວນເຮັດແນວໃດຖ້າເຈົ້າມີບັນຫາບໍ່ປະສົບຜົນສຳເລັດໃນເປົ້າໝາຍຊີວິດຂອງເຈົ້າ?

## ການແນະນຳ ວິທີການຂຽນບັນທຶກລາຍວັນ

ເອົາບັນທຶກລາຍວັນໃຫ້ຜູ້ເຂົ້າຮ່ວມພ້ອມປາກກາ.

ອະທິບາຍບັນທຶກລາຍວັນເປັນປື້ມເຊິ່ງພວກເຂົາໄວ້ຂຽນຄວາມຄິດເຫັນ ແລະ ຄວາມຮູ້ສຶກ.

ມັນເປັນເລື່ອງສ່ວນຕົວ ແລະ ບໍ່ມີໃຜຈະສາມາດອ່ານ.ແມ່ນແຕ່ຄູຝຶກກໍ່ບໍ່ສາມາດອ່ານ.ຈົ່ງຮັກສາໄວ້ໃນກ່ອງທີ່ດີ SNCC.

ຈົ່ງບອກໃຫ້ຜູ້ເຂົ້າຮ່ວມ ຖ້າພວກເຂົາມັກແຕ້ມຮູບກ່ຽວກັບຊີວິດຂອງພວກເຂົາໃສ່ໃນບັນທຶກປະຈຳວັນຂອງພວກເຂົາ.

ພວກເຂົາຈະຂຽນບັນທຶກປະຈຳວັນສິ່ງທີ່ມັນເກີດກັບພວກເຂົາ, ສິ່ງທີ່ພວກເຂົາຮູ້ສຶກ, ສິ່ງທີ່ໄດ້ໂອ້ລົມກັນໃນພວກ SNCC ເຂົາສາມາດຂຽນສິ່ງໃດກໍ່ໄດ້.

ອະທິບາຍວ່າບາງຄັ້ງໃນລະຫ່ວາງ SNCC ຄູ່ຝຶກຈະຕ້ອງໄດ້ຖາມຜູ້ເຂົ້າຮ່ວມໃຫ້ຂຽນຫົວຂໍ້ສະເພາະຈາກຄູ່ມື ໃສ່ໃນບັນທຶກລາຍວັນ, ແຕ່ຜູ້ເຂົ້າຮ່ວມບໍ່ໃຫ້ຜູ້ອື່ນອ່ານວ່າພວກເຂົາຂຽນຫຍັງແດ່ໃນກຸ່ມ. ມັນເປັນເລື່ອງສ່ວນຕົວ.

ໃຫ້ກຸ່ມຂຽນບັນທຶກປະຈຳວັນຂອງພວກເຂົາພັນລະນາເຖິງຊີວິດຂອງພວກເຂົາ, ເປົ້າໝາຍຂອງພວກເຂົາແລະສິ່ງທ້າທາຍຂອງພວກເຂົາໃນຕອນທ້າຍຂອງບົດຮຽນທີ່ຍັງເຫຼືອ.

ໃນຕອນທ້າຍຂອງບົດຮຽນເກັບລວບລວມບັນທຶກລາຍວັນ. ເກັບໄວ້ໃນກ່ອງຢ່າງດີ ເພື່ອເກັບຮັກສາໄວ້ຝຶກຄັ້ງຕໍ່ໄປ.

**ສະຫຼຸບບົດຮຽນ**

- ມັນມີປະໂຫຍດຕໍ່ສະຕິຕົນເອງ ແລະ ທົບທວນຊີວິດຂອງເຈົ້າ.
- ບັນທຶກລາຍວັນສາມາດຊ່ວຍໃນສິ່ງນີ້.
- ເຈົ້າພຽງຄົນດຽວສາມາດອ່ານບັນທຶກປະຈຳວັນ.

## ປິດບົດຮຽນ

ຂອບໃຈທຸກໆຄົນທີ່ເຂົ້າຮ່ວມ.ພົບກັນໄດ້ອາທິດໜ້າ.ພວກເຂົາມາຮ່ວມທັງສອງຕອນຂອງບົດຮຽນບັດນີ້ພວກເຂົາສະສົມໄດ້ 2 ດາວແລ້ວ.

ໃຫ້ສະມາຊິກກຸ່ມເບິ່ງໄປທີ່ຊຸມຊົນຂອງພວກເຂົາແລ້ວຕອບຄຳຖາມດັ່ງຕໍ່ໄປນີ້:

- ເຈົ້າຄິດວ່າຄົນໃນຊຸມຊົນຂອງເຈົ້າມີເປົ້າໝາຍໃນຊີວິດບໍ?
- ເປົ້າໝາຍໃນຊີວິດຂອງພວກເຂົາແມ່ນຫຍັງ?

ບັນດາຄູຝຶກສາມາດຖາມຜູ້ເຂົ້າຮ່ວມຂຽນຄຳຖາມເຫຼົ່ານີ້ແລ້ວຖືກັບບ້ານເພື່ອເຕືອນຄວາມຈຳຂອງພວກເຂົາ.